# ການປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳສິລະປະການສະແດງທີ່ເປັນເອກະລັກຂອງເມືອງມໍລະດົກໂລກ ແຂວງຫຼວງພະບາງ ຕາມແຜນພັດທະນາວັດທະນະທຳ-ສັງຄົມແຫ່ງຊາດລາວ

*ສົມເໝາະ ປັນຍາວົງ*, ພອນ ເພັງປັນຍາ[2], ເຄືອວັນ ສົມມາລາວົງ[3], ຈິດາ ສີພາລາ[4], ລຳພົງ ວໍລະດີ[5]*

*[*; 4] ມະຫາວິທະຍາໄລແຫ່ງຊາດ; [2] ມະຫາໄລສຸພານຸວົງ; [3] ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ; [5] ສະພາແຫ່ງຊາດ*

## ບົດຄັດຫຍໍ້

ບົດຄົ້ນຄວ້ານີ້ມີຈຸດປະສົງເພື່ອສຶກສາການປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳສິລະປະການສະແດງທີ່ເປັນເອກະລັກຂອງເມືອງມໍລະດົກໂລກ ແຂວງຫຼວງພະບາງ, ສອດຄ່ອງກັບແຜນພັດທະນາວັດທະນະທຳ-ສັງຄົມແຫ່ງຊາດລາວ. ການສຶກສາໄດ້ເກັບກຳຂໍ້ມູນກ່ຽວກັບປະເພດ, ປະຫວັດຄວາມເປັນມາ, ຂະບວນການປ່ຽນແປງ, ບັນຫາ ແລະ ແນວທາງໃນການປົກປັກຮັກສາສິລະປະເຫຼົ່ານັ້ນ, ໂດຍອີງໃສ່ການສຳພາດນັກສະແດງຮຸ່ນອາວຸໂສ ແລະ ຮຸ່ນສືບທອດຈຳນວນ 25 ຄົນ. ຜົນການຄົ້ນຄວ້າພົບວ່າ ສິລະປະການສະແດງຂອງຫຼວງພະບາງມີຄວາມຫຼາກຫຼາຍ ເຊັ່ນ: ການຂັບ (ຂັບທຸ້ມ, ອ່ານໜັງສື, ຂັບສະຫຼາງ-ສາມສ້າວ ແລະ ອື່ນໆ), ການຟ້ອນ (ຟ້ອນນາງແກ້ວ, ຟ້ອນພະລັກພະລາມ) ແລະ ລະຄອນອີ່ປ໊ອກ ເຊິ່ງແຕ່ລະປະເພດມີປະຫວັດ ແລະ ລັກສະນະສະເພາະຕົວທີ່ຝັງເລິກໃນວັດທະນະທຳ ແລະ ຄວາມເຊື່ອ. ເຖິງຢ່າງໃດກໍຕາມ, ສິລະປະເຫຼົ່ານີ້ກຳລັງປະເຊີນກັບສິ່ງທ້າທາຍຈາກການພັດທະນາທາງສັງຄົມ, ອິດທິພົນຂອງສື່ທີ່ທັນສະໄໝ ແລະ ຂໍ້ຈຳກັດດ້ານເສດຖະກິດ. ແນວທາງການປົກປັກຮັກສາທີ່ສຳຄັນປະກອບມີການປູກຈິດສຳນຶກ, ການນຳໃຊ້ງານບຸນປະເພນີເປັນເວທີເຜີຍແຜ່, ການປັບຕົວສ້າງສັນຮູບແບບໃໝ່, ການຖ່າຍທອດຄວາມຮູ້ ແລະ ການສະໜັບສະໜູນຈາກພາກລັດ. ການຄົ້ນຄວ້ານີ້ສະໜອງຂໍ້ມູນສຳຄັນສຳລັບການວາງແຜນ ແລະ ດຳເນີນງານເພື່ອຮັກສາ ແລະ ສົ່ງເສີມມໍລະດົກວັດທະນະທຳອັນລ້ຳຄ່າຂອງຫຼວງພະບາງ.

**ຄຳສຳຄັນ:** ສິລະປະການສະແດງ, ຫຼວງພະບາງ, ການປົກປັກຮັກສາ, ການສົ່ງເສີມ, ວັດທະນະທຳພື້ນເມືອງ.

**ຕິດຕໍ່ພົວພັນ : ສົມເໝາະ ປັນຍາວົງ ເບີໂທລະສັບ 020 5912 5301; ອີເມວ: more_ries85@yahoo.com*

# Preservation and Promotion of Performing Arts as a Unique World Heritage City of Luang Prabang Province in Accordance with the National Socio-Cultural Plan

*Sommor PANYAVONG*, Phone PHENGPHANYA[2], Kheuavan SIMMALAVONG[3], Chinda SEEPHALAR[4], Lamphong VOLADY[5]*

*[*, 4]National University of Laos; [2]Souphanouvong University; [3]Ministry of Information, Culture and Tourism; [5]National Assembly of the Lao PDR*

**Abstract**

This research aims to study the preservation and promotion of unique traditional performing arts in Luang Prabang, a World Heritage City, in accordance with Laos' National Socio-Cultural Development Plan. The study collected information on the types, historical backgrounds, transformation processes, challenges, and preservation approaches of these arts. Data was gathered through interviews with senior and successor artists for 25 people. The findings reveal a rich diversity of performing arts in Luang Prabang, including various forms of "Khab" (traditional singing such as Khab Thum, Arn Nangsue, Khab Salang-Samsaew, etc.), "Fon" (traditional dancing such as Fon Nang Kaew, Fon Phalack Phalame), and "Lakhon I-Pok" (I-Pok Drama). Each form possesses unique historical and characteristic features deeply embedded in the local culture and beliefs. However, these arts face significant challenges from social development, the influence of modern media, and economic constraints. Key preservation strategies identified include raising awareness, utilizing traditional festivals as platforms for dissemination, creative adaptation of new forms, knowledge transfer, and government support. This research provides crucial insights for planning and implementing initiatives to safeguard and promote Luang Praban's invaluable cultural heritage.

***Keywords:*** *Performing arts, Luang Prabang, Preservation, Promotion, Traditional culture.*

**Correspondence: Sommor PANYAVONG Tel: 020 5912 5301; Email: more_ries85@yahoo.com*

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ວັດທະນະທຳລາວເປັນເອກະລັກຄວາມເປັນຊາດລາວ ເປັນຮາກຖານຂອງການສ້າງຄວາມສາມັກຄີ ແລະ ຄວາມໝັ້ນຄົງຍືນຍົງຂອງຊາດ, ເປັນສິ່ງສະແດງເຖິງກຽດສັກສີ, ຄວາມພາກພູມໃຈຮ່ວມກັນຂອງຄົນລາວ, ເປັນປັດໄຈໃຫ້ຄົນໃນຊາດປະພຶດໃນທາງທີ່ດີງາມ, ມີຄຸນນະທຳເພື່ອພັດທະນາຕົນເອງ ພັດທະນາສັງຄົມ ແລະ ປະເທດຊາດ. ສົມຄວນຕ້ອງໄດ້ຮັກສາ, ພັດທະນາ ແລະ ສົ່ງເສີມວັດທະນະທຳລາວຢ່າງເອົາຈິງເອົາຈັງ ແລະ ກວ້າງຂວາງ. ດັ່ງທີ່ມະຕິຂອງສູນກາງພັກຄັ້ງທີ 9 (ສະໄໝທີ V) ກ່ຽວກັບວຽກງານວັດທະນະທຳໃນໄລຍະໃໝ່ ແລະ ລັດຖະທຳມະນູນແຫ່ງ ສປປ ລາວ ທີ່ກຳນົດໄວ້ໃນມາດຕາທີ 23 ວ່າ "ລັດສົ່ງເສີມການອະນຸລັກວັດທະນະທຳທີ່ເປັນເອກະລັກ ແລະ ມູນເຊື້ອອັນດີງາມຂອງຊາດ ແລະ ຂອງຊົນເຜົ່າ ສົມທົບກັບການຮັບເອົາວັດທະນະທຳ ທີ່ກ້າວໜ້າຂອງໂລກຢ່າງມີການເລືອກເຟັ້ນ..."

ສະນັ້ນ, ລັດຖະບານແຫ່ງ ສ ປປ ລາວຈຶ່ງກຳນົດວັດທະນະທຳແຫ່ງຊາດນີ້ອອກເພື່ອເປັນຫຼັກໃຫ້ໜ່ວຍງານຂອງລັດ, ເອກະຊົນ ລວມທັງປະຊາຊົນຮ່ວມກັນອະນຸລັກຮັກສາ, ພັດທະນາ ແລະ ສົ່ງເສີມວັດທະນະທຳ ຢ່າງມີຈຸດປະສົງ ເປົ້າໝາຍອັນດຽວກັນ ແລະ ປະສົມປະສານງານກັນຢ່າງສອດຄ່ອງ ຄື: 1) ອະນຸລັກຮັກສາ, ພັດທະນາ ແລະ ສົ່ງເສີມວັດທະນະທຳລາວ ໃນທຸກດ້ານໃຫ້ມີລັກສະນະຊາດ, ປະຊາຊົນ ແລະ ກ້າວໜ້າດ້ວຍການສຶກສາຄົ້ນຄວ້າ, ວິໄຈຟື້ນຟູ ແລະ ພັດທະນາໃຫ້ເປັນເຄື່ອງມືສຳຄັນ ສຳລັບການແກ້ໄຂບັນຫາການດຳເນີນຊີວິດ, ການພັດທະນາປະເທດດ້ານສັງຄົມ, ເສດຖະກິດ, ການເມືອງ ແລະ ການປ້ອງກັນຊາດປ້ອງກັນຄວາມສະຫງົບ, ປ້ອງກັນການທຳລາຍວັດທະນະທຳ, ທຳລາຍພຸດທະສາສະໜາ ແລະ ທະນຸບຳລຸງພຸດທະສາສະໜາໃຫ້ເປັນຫຼັກໃນການພັດທະນາຈິດໃຈຂອງປະຊາຊົນ; 2) ສົ່ງເສີມວັດທະນະທຳຂອງຊາດ ແລະ ວັດທະນະທຳຂອງບັນດາຊົນເຜົ່າໃນທ້ອງຖິ່ນຕ່າງໆ ເພື່ອໃຫ້ປະຊາຊົນມີຄວາມເຂົ້າໃຈ ເຫັນຄຸນຄ່າ ແລະ ຍອມຮັບວັດທະນະທຳຂອງຊົນເຜົ່າທ້ອງຖິ່ນເຊິ່ງກັນແລະກັນ. ສົ່ງເສີມການສ້າງຄົນ, ຄອບຄົວ ແລະ ບ້ານວັດທະນະທຳຢ່າງກວ້າງຂວາງທົ່ວເຖິງ ແລະ ສ້າງໃຫ້ເກີດການປະສົມປະສານທາງດ້ານວັດທະນະທຳ ອັນນຳໄປສູ່ການຢູ່ຮ່ວມກັນຢ່າງມີສັນຕິສຸກໃນຊາດ ແລະ ມີຄວາມຫວງແຫນວັດທະນະທຳລາວຍິ່ງໆຂຶ້ນ; 3) ເຜີຍແຜ່ວັດທະນະທຳລາວ ໃນທຸກດ້ານໄປສູ່ປະຊາຊົນ ແລະ ຊຸກຍູ້ປຸກລະດົມປະຊາຊົນໃຫ້ມີການປະຕິບັດຢ່າງກວ້າງຂວາງຍິ່ງຂຶ້ນ ເພື່ອໃຫ້ເກີດຄວາມຮູ້ ຄວາມເຂົ້າໃຈເຖິງຄວາມສຳຄັນຂອງວັດທະນະທຳທີ່ເປັນເອກະລັກ, ເປັນກຽດສັກສີ, ເປັນພື້ນຖານ

ແຫ່ງຄວາມສາມັກຄີ ໝັ້ນຄົງ ຍືນຍົງຂອງຊາດ, ເປັນກໍາລັງດັນໃຫ້ແກ່ເສດຖະກິດ-ສັງຄົມຂະຫຍາຍຕົວ ແລະ ເປັນເປົ້າໝາຍຂອງການພັດທະນາສັງຄົມຕະຫຼອດຈົນເຖິງຄວາມເຂົ້າໃຈເຊິ່ງກັນແລະກັນ ທັງຢູ່ພາຍໃນ ແລະ ລະຫວ່າງປະເທດ; 4) ສະໜັບສະໜູນ, ສົ່ງເສີມໃຫ້ມີການແລກປ່ຽນວັດທະນະທໍາກັບຕ່າງປະເທດເພື່ອເສີມສ້າງຄວາມເຂົ້າໃຈອັນດີລະຫວ່າງຊາດ ລວມທັງຮູ້ຈັກເລືອກເຟັ້ນວັດທະນະທໍາຂອງຕ່າງຊາດ ທີ່ເຜີຍແຜ່ເຂົ້າມາໃນປະເທດລາວ ຫຼື ຜົນຂອງການແລກປ່ຽນວັດທະນະທໍາ

ໂດຍນໍາມາກັ່ນກອງ, ປັບປຸງ, ດັດແປງໃຫ້ເໝາະສົມກັບວິຖີການດໍາເນີນຊີວິດຂອງຄົນລາວ ແລະ ຄວາມໝັ້ນຄົງປອດໄພຂອງຊາດ; 5) ສະໜັບສະໜູນສົ່ງເສີມໃຫ້ໜ່ວຍງານຂອງລັດ, ຂອງເອກະຊົນຕະຫຼອດປະຊາຊົນທີ່ດໍາເນີນງານດ້ານວັດທະນະທໍາ ໄດ້ປະສົມປະສານກັນຢ່າງໃກ້ຊິດ ໂດຍປຸກລະດົມພາລະກໍາລັງຊັບ, ສະຕິປັນຍາທັງພາກລັດ, ເອກະຊົນ ແລະ ປະຊາຊົນ ເພື່ອອະນຸລັກຮັກສາ, ພັດທະນາ ແລະ ສົ່ງເສີມຄຸນຄ່າວັດທະນະທໍາໃຫ້ໝັ້ນຄົງເປັນພື້ນຖານແຫ່ງການດໍາເນີນຊີວິດຂອງປະຊາຊົນຕະຫຼອດຈົນຮ່ວມກັນແກ້ໄຂບັນຫາວັດທະນະທໍາ, ໃຫ້ວັດທະນະທໍາມີບົດບາດສະໜັບສະໜູນ ການພັດທະນາປະເທດຊາດຢ່າງແທ້ຈິງ (ກົດໝາຍວ່າດ້ວຍສິລະປະການສະແດງ ເລກທີ 16/ສພຊ, ນະຄອນຫຼວງວຽງຈັນ, ວັນທີ 04 ພຶດສະພາ 2017)

ສປປ ລາວ ເປັນປະເທດໜຶ່ງທີ່ມີການປ່ຽນແປງ ແລະ ມີການປັບຕົວຢູ່ສະເໝີ. ສັງຄົມ ແລະ ວັດທະນະທໍາກໍມີລັກສະນະເຊັ່ນດຽວກັນ ມີການປ່ຽນແປງຢູ່ຕະຫຼອດເວລາ ຈຶ່ງເຮັດໃຫ້ໂຄງສ້າງຂອງສັງຄົມ ແລະ ວິຖີການດໍາລົງຊີວິດ ຫຼື ວັດທະນະທໍາຂອງມະນຸດໃນສັງຄົມ, ແຕ່ລະຍຸກ, ແຕ່ລະສະໄໝມີການປ່ຽນແປງ. ອີງໃສ່ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII ແຕ່ປີ 2016-2020 ໄດ້ເວົ້າວ່າ: ເອົາໃຈໃສ່ການປົກປັກຮັກສາ ແລະ ເສີມຂະຫຍາຍຮີດຄອງປະເພນີ, ວັດທະນະທໍາອັນດີງາມຂອງຊາດ ພ້ອມທັງການປັບປຸງຄຸນນະພາບຂອງສື່ມວນຊົນເປັນຄືແນວໃດ, ການພັດທະນາສີມືແຮງງານ ແລະ ສະພາບການສະໜອງແຮງງານໃຫ້ຕະຫຼາດເປັນແນວໃດ. ໃນກອງປະຊຸມໃຫຍ່ຂອງລັດຖະບານ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໄດ້ຍົກສູງບົດບາດຄວາມສໍາຄັນ ຕໍ່ວຽກງານວັດທະນະທໍາ-ສັງຄົມໃນກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ IX ແຕ່ປີ 2021-2025 ໄດ້ເວົ້າວ່າ ວັດທະນະທໍາເປັນພື້ນຖານຄວາມຍືນຍົງຂອງຊາດ, ເສີມສ້າງອະລິຍະທໍາທາງດ້ານຈິດໃຈ, ປຸກແນວຄິດ ແລະ ຄຸນສົມບັດປະຕິວັດ, ສ້າງຄົນໃຫ້ມີຊີວະທັດ ແລະ ໂລກະທັດກ້າວໜ້າ, ຮູ້ຮັບເອົາສິ່ງທີ່ມີຄຸນຄ່າຈາກວັດທະນະທໍານານາຊາດ. ສົ່ງເສີມການປະດິດແຕ່ງ, ການອ່ານ, ການຂຽນ, ການຂັບຮ້ອງ, ການສະແດງເພື່ອປະກອບສ່ວນພັດທະນາຄົນໃຫ້ມີຄວາມສີວິໄລທາງດ້ານຈິດໃຈໄປຄຽງຄູ່ກັບການຂະຫຍາຍຕົວຂອງຍຸກໂລກາພິວັດບົນພື້ນຖານການອະນຸລັກ, ການສືບທອດ ແລະ ການເສີມຂະຫຍາຍມູນເຊື້ອວັດທະນະທໍາອັນດີງາມຂອງຊາດ.

ຈາກການສຶກສາແຫຼ່ງຂໍ້ມູນຕ່າງໆ ເຫັນວ່າ ວັດທະນະທໍາສິລະປະການສະແດງ ໂດຍສະເພາະແມ່ນການສະແດງທີ່ເປັນເອກະລັກປະຈໍາທ້ອງຖິ່ນ ເປັນທີ່ນິຍົມຊົມຊອບຫຼາຍສໍາລັບຄົນລາວ ແລະ ຄົນຕ່າງປະເທດ; ແຕ່ເຖິງຢ່າງໃດກໍຕາມ ເລື່ອງທີ່ໜ້າເປັນຫ່ວງທີ່ສຸດກໍຄື ເລື່ອງການປົກປັກຮັກສາ ແລະ ສົ່ງເສີມສິລະປະການສະແດງ ພົບວ່າ ການຄົ້ນຄວ້າວິໄຈວິທະຍາສາດຍັງມີໜ້ອຍ ແລະ ບໍ່ທັນກວ້າງຂວາງເທົ່າທີ່ຄວນ. ການຄົ້ນຄວ້າວິໄຈ ເລື່ອງການປົກປັກຮັກສາ ແລະ ສົ່ງເສີມສິລະປະທ້ອງຖິ່ນ ໃນຂອບເຂດຊຸມຊົນທ້ອງຖິ່ນ ແລະ ສະຖາບັນການສຶກສາຕ່າງໆ ຖືວ່າບໍ່ຄ່ອຍພົບເຫັນ.

ອີກປະການໜຶ່ງ ເຫັນວ່າ ການສະແດງສິລະປະພື້ນເມືອງໂດຍສະເພາະສິລະປະທີ່ເປັນເອກະລັກປະຈໍາທ້ອງຖິ່ນຂອງຊາວຫຼວງພະບາງ ໃນເລື່ອງການສັງລວມເປັນລາຍລັກອັກສອນຍັງບໍ່ປາກົດເຫັນຫຼາຍ, ຜູ້ມີຄວາມຮູ້ປະສົບການຍັງຂາດການຖ່າຍທອດໃຫ້ລູກຫຼານ ແລະ ກະແສຄວາມນິຍົມຊົມຊອບ ສິລະປະການສະແດງພື້ນເມືອງ ຂອງໄວໜຸ່ມຍິງສາວແມ່ນມີໜ້ອຍ. ແນວທາງການອະນຸລັກ ແລະ ສົ່ງເສີມຍັງບໍ່ທັນເປັນຂະບວນຟົດຟື້ນເທົ່າທີ່ຄວນ. ສະນັ້ນ, ເຮັດໃຫ້ການສະແດງພື້ນເມືອງຂອງຊາວຫຼວງພະບາງຖືກປະຖິ້ມໄປຈໍານວນໜຶ່ງເຊັ່ນ ຟ້ອນໝໍ້ອຸບບັງ, ຟ້ອນໂຂນ, ໂຕກະຕຸນ, ອີ່ປ໊ອກ ເປັນຕົ້ນ. ໃນໄລຍະທີ່ຜ່ານມາໄດ້ມີນັກຄົ້ນຄວ້າຫຼາຍທ່ານທັງພາຍໃນ ແລະ ຕ່າງປະເທດກໍໄດ້ສຶກສາກ່ຽວກັບສິລະປະການສະແດງພື້ນເມືອງ ເຊັ່ນ ປານີ ນໍລົມ (2017) ໄດ້ສຶກສາຄໍາຮຽກຊື່ທ່າຟ້ອນນາງແກ້ວຂອງຫຼວງພະບາງ. ສີຫວັດ ຈັນດາລາດ (2012) ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ການອະນຸລັກຂັບທຸ້ມຫຼວງພະບາງ. ເພຍເລົ່າ ແລະ ຄໍາໄຊ ຊົງ (2015) ໄດ້ສຶກສາການຂັບມື້ງບ້ານຊຽງຈ່າ ເມືອງນໍ້າບາກ ແຂວງຫຼວງພະບາງ; ໝອນ ຄູດທະວົງ (2019) ສຶກສາບົດ ອ່ານໜັງສືຫຼວງພະບາງ ຂອງ ທຸມພັນ ຣັດຕະນະວົງ ເຖິງແມ່ນວ່າຈະມີນັກຄົ້ນຄວ້າຫຼາຍທ່ານທີ່ໄດ້ສຶກສາກ່ຽວກັບສິລະປະການສະແດງມາແດ່ແລ້ວ ແຕ່ໃນກໍລະນີສຶກສາ ການປົກປັກຮັກສາ ແລະ ສົ່ງເສີມວັດທະນະທໍາ ສິລະປະການສະແດງທີ່ເປັນເອກະລັກຂອງແຂວງຫຼວງພະບາງ ຕາມແຜນພັດທະນາວັດທະນະທໍາ-ສັງຄົມແຫ່ງຊາດລາວ ຍັງບໍ່ທັນມີນັກຄົ້ນຄວ້າທ່ານໃດສຶກສາມາກ່ອນ. ດັ່ງນັ້ນ, ຈຶ່ງເປັນແຮງບັນດານໃຈ ທີ່ເຮັດໃຫ້ກຸ່ມຜູ້ຄົ້ນຄວ້າມີແນວຄວາມຄິດ ທີ່ຢາກສຶກສາຫົວຂໍ້ນີ້ ເພື່ອເປັນແນວທາງໃນການການອະນຸລັກ ແລະ ສົ່ງເສີມວັດທະນະທໍາການສະແດງພື້ນເມືອງ ທີ່ເປັນເອກະລັກສະເພາະຂອງທ້ອງຖິ່ນ

ແຂວງຫຼວງພະບາງ ກໍຄືຂອງຊາດ ໃຫ້ຢູ່ຄູ່ສັງຄົມລາວຕະຫຼອດໄປ ແລະ ທີ່ສຳຄັນກໍເພື່ອເປັນການປະກອບສ່ວນປະຕິບັດຕາມສອງໜ້າທີ່ຍຸດທະສາດຂອງຊາດກໍຄື ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດອີກດ້ວຍ.

*1.2 ຄຳຖາມຂອງການຄົ້ນຄວ້າ*

1) ສິລະປະການສະແດງພື້ນເມືອງທີ່ເປັນເອກະລັກຂອງແຂວງຫຼວງພະບາງມີຈັກປະເພດ? ແຕ່ລະປະເພດມີປະຫວັດຄວາມເປັນມາຄືແນວໃດ?

2) ສິລະປະການສະແດງພື້ນເມືອງທີ່ເປັນເອກະລັກຂອງແຂວງຫຼວງພະບາງມີຂະບວນການປ່ຽນແປງຄືແນວໃດ?

3) ຊາວຫຼວງພະບາງພົບບັນຫາໃດແດ່ໃນການອະນຸລັກ ແລະ ສົ່ງເສີມສິລະປະການສະແດງພື້ນເມືອງທີ່ເປັນເອກະລັກຂອງແຂວງຫຼວງພະບາງ ແລະ ພວກເຂົາມີແນວທາງໃນການປົກປັກຮັກສາ ແລະ ສົ່ງເສີມສິລະປະການສະແດງພື້ນເມືອງຂອງຕົນເອງຄືແນວໃດ?

*1.3 ຈຸດປະສົງຂອງການຄົ້ນຄວ້າ*

1) ເພື່ອຄົ້ນຫາປະເພດ ແລະ ປະຫວັດຄວາມເປັນມາຂອງສິລະປະການສະແດງພື້ນເມືອງທີ່ເປັນເອກະລັກຂອງແຂວງຫຼວງພະບາງ.

2) ເພື່ອຄົ້ນຫາຂະບວນການປ່ຽນແປງຂອງສິລະປະການສະແດງພື້ນເມືອງ ທີ່ເປັນເອກະລັກຂອງແຂວງຫຼວງພະບາງ.

3) ເພື່ອຄົ້ນຫາບັນຫາ, ແນວທາງໃນການປົກປັກຮັກສາ ແລະ ສົ່ງເສີມສິລະປະການສະແດງທີ່ເປັນເອກະລັກຂອງແຂວງຫຼວງພະບາງ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ຜ່ານມາມີຜົນງານການຄົ້ນຄວ້າວິໄຈ ລວມທັງຮູບແບບປະລິມານ, ຮູບແບບຄຸນນະພາບກ່ຽວກັບການອະນຸລັກ ແລະ ສົ່ງເສີມວັດທະນະທຳຂອງປະຊາຊົນບັນດາເຜົ່າ ທັງພາຍໃນ ແລະ ຕ່າງປະເທດເຊິ່ງສາມາດສະຫຼຸບສັງລວມບົດຄົ້ນຄວ້າກ່ຽວຂ້ອງໄດ້ດັ່ງນີ້:

ສີຫວັດ ຈັນດາລາດ (2012) ໄດ້ສຶກສາປັດໄຈ ທີ່ສົ່ງຜົນຕໍ່ການອະນຸລັກຂັບທຸ້ມຫຼວງພະບາງ ໂດຍມີຈຸດປະສົງໃນການວິໄຈຢູ່ 2 ຈຸດປະສົງ ຄື: ປັດໄຈທີ່ສົ່ງຜົນຕໍ່ກັບການອະນຸລັກຂັບທຸ້ມຫຼວງພະບາງ ແລະ ວິທີໃນການອະນຸລັກຂັບທຸ້ມຫຼວງພະບາງ ໂດຍນຳໃຊ້ວິທີການຄົ້ນຄວ້າແບບຄຸນນະພາບ ຜົນການສຶກສາປັດໄຈພາຍນອກພົບວ່າ ບັນດາປັດໄຈທີ່ມີຜົນຕໍ່ກັບການອະນຸລັກວັດທະນະທຳຂັບທຸ້ມຫຼວງພະບາງ ທີ່ເປັນປັດໄຈຫຼາຍທີ່ສຸດແມ່ນປັດໄຈທາງດ້ານການພັດທະນາ ເປັນປັດໄຈທີ່ສົ່ງຜົນຫຼາຍທີ່ສຸດຕໍ່ກັບຂັບທຸ້ມຫຼວງພະບາງ ທີ່ເຮັດໃຫ້ຄົນເກີດໃໝ່ໃຫຍ່ລຸນ ແລ່ນຕາມຍຸກຂອງການພັດທະນາທີ່ມີຄວາມທັນສະໄໝ, ການຮຽນແບບສິ່ງຕ່າງໆຈາກການໄດ້ເບິ່ງ, ໄດ້ເຫັນ ແລະ ໄດ້ສຳຜັດໃນທາງກົງ ແລະ ທາງອ້ອມ. ຈາກການສັງເກດຕົວຈິງຂອງຜູ້ວິໄຈ ສັງເກດເຫັນວ່າ: ແຕ່ລະຄົວເຮືອນແມ່ນມີການພັດທະນາທີ່ນຳໄປສູ່ຄວາມທັນສະໄໝ ສື່ທາງໂທລະສັບ ທີ່ເປັນປັດໄຈຫຼັກທີ່ເຮັດໃຫ້ການອະນຸລັກວັດທະນະທຳຂັບທຸ້ມຫຼວງພະບາງນັບມື້ນັບຫຼຸດໜ້ອຍຖອຍລົງ. ຈາກການສັງເກດຕົວຈິງຂອງຜູ້ວິໄຈເຫັນໄດ້ຊັດເຈນວ່າບັນດາໄວໜຸ່ມນັກຮຽນ, ນັກສຶກສາ ແລະ ກຸ່ມຄົນທຸກເພດໄວໃນສັງຄົມ ໃຊ້ເວລາວ່າງຈາກການຮຽນແມ່ນຈະຫຼິ້ນແຕ່ໂທລະສັບເປັນສ່ວນໃຫຍ່ ຍ້ອນວ່າປັດຈຸບັນເປັນຍຸກແຫ່ງໂລກາພິວັດ ການເຂົ້າເຖິງສື່ຕ່າງໆແມ່ນມີຄວາມສະດວກສະບາຍ, ໃນນັ້ນຕົວສະມາດໂຟນຍັງມີລູກຫຼິ້ນທີ່ຫຼາກຫຼາຍ ເປັນຕົ້ນແມ່ນແອັບພິເຄຊັ່ນຕ່າງໆ, ເກມຕ່າງໆທີ່ມີການພັດທະນາຢ່າງກ້າວກະໂດດ. ມີພຽງຈຳນວນເລັກນ້ອຍເທົ່ານັ້ນ ທີ່ຈະໃຊ້ເວລາວ່າງໃຫ້ເກີດປະໂຫຍດແກ່ຕົນເອງ ເຊັ່ນ: ໄປຮຽນເພີ່ມ, ໄປສູນວັດທະນະທຳເພື່ອຮຽນຮູ້ສິ່ງຕ່າງໆ. ປັດໄຈພາຍໃນພົບວ່າ ປັດໄຈພາຍໃນທີ່ສົ່ງຜົນຕໍ່ກັບການອະນຸລັກທີ່ມີຜົນຫຼາຍທີ່ສຸດແມ່ນ ທາງດ້ານເສດຖະກິດ ລາຍຮັບ-ລາຍຈ່າຍ ທີ່ເປັນປັດໄຈອັນໜຶ່ງ ທີ່ເຮັດໃຫ້ການອະນຸລັກວັດທະນະທຳຂັບທຸ້ມຫຼຸດນ້ອຍຖອຍລົງເຊັ່ນດຽວກັນ. ຈາກການສຳພາດທີ່ວ່າ ເສດຖະກິດເປັນປັດໄຈທີ່ມີຜົນຕໍ່ກັບການອະນຸລັກເພາະວ່າດຽວນີ້ຄ່າຈ້າງນັກເສບ, ນັກຟ້ອນ, ນັກຂັບລຳແມ່ນມີຄ່າຕົວຂ້ອງຂ້າງແພງຫຼາຍ. ຍົກຕົວຢ່າງຄ່າຈ້າງປ້າເຫຼັກມາຂັບລຳໃນເວລາທີ່ມີງານບຸນແມ່ນເພິ່ນເອົາຄືນລະ 400.000-500.000 ກີບຕໍ່ຄືນ ຈຶ່ງເຮັດໃຫ້ປະຊາຊົນຜູ້ທີ່ມີລາຍໄດ້ໜ້ອຍບໍ່ສາມາດຈ້າງໄດ້. ຈາກການສັງເກດຕົວຈິງຂອງຜູ້ວິໄຈເຫັນວ່າ ຄ່າຈ້າງວົງດົນຕີພື້ນເມືອງລາວ, ນັກຂັບນັກລຳ ແມ່ນຂ້ອນຂ້າງແພງຫຼາຍ ເຮັດໃຫ້ຜູ້ທີ່ມີລາຍຮັບຈາກເສດຖະກິດຄອບຄົວຕ່ຳແມ່ນບໍ່ມີຄວາມສາມາດທີ່ຈະຈ້າງວົງດົນຕີ, ນັກຂັບລຳພື້ນເມືອງມາສະແດງໃນງານຂອງຕົນເອງໄດ້. ວິທີການອະນຸລັກພົບວ່າ ການປູກຈິດສຳນຶກເປັນການປົກປັກຮັກສາ ແລະ ສ້າງທ່າແຮງອັນບົ່ມຊ້ອນໃຫ້ຄົນຍຸກໃໝ່ຮູ້ຈັກຮັກຫອມວັດທະນະທຳອັນເປັນມູນມໍລະດົກທາງປັນຍາທີ່ບັນພະບຸລຸດລາວໄດ້ສະສົມ ຖ່າຍທອດມາຈົນຮອດປັດຈຸບັນໄວ້ໄດ້. ການປູກຈິດສຳນຶກແມ່ນສ້າງໃຫ້ຄົນຮຸ່ນໃໝ່ຮູ້, ເຂົ້າໃຈ, ນຳໄປປະຕິບັດສືບທອດ ແລະ ຮູ້ຈັກຄຸນຄ່າອັນລວມຍອດຂອງວັດທະນະທຳຂັບທຸ້ມເອົາໄວ້ໄດ້.

ຜົນການຄົ້ນຄວ້າຍັງພົບວ່າ ງານບຸນປະເພນີກໍແມ່ນໜຶ່ງວິທີໃນການໂຄສະນາເຜີຍແຜ່ສິລະປະການສະແດງ ເພາະວ່າການສະແດງວັດທະນະທຳພື້ນເມືອງ ແມ່ນການໃຫ້ໂອກາດແກ່ຜູ້ຄົນໄດ້ມາເລາະທ່ຽວເບິ່ງງານການສະແດງທີ່ເປັນເອກະລັກຂອງທ້ອງຖິ່ນ. ສະນັ້ນ, ການສົ່ງເສີມສິລະປະການສະແດງພື້ນເມືອງໃນ

ງານບຸນປະເພນີ ແມ່ນວິຖີຊີວິດຢ່າງໜຶ່ງຂອງທ້ອງຖິ່ນພວກເຮົາ, ຈະບໍ່ພຽງແຕ່ໄປເລາະທ່ຽວຊົມເທົ່ານັ້ນ ຫຼື ເຕົ້າໂຮມຕາມສະຖານທີ່ໃດໜຶ່ງເທົ່ານັ້ນ. ຍັງພົບວ່າ ເຫດຜົນຄວນສົ່ງເສີມສິລະປະການສະແດງ ຍ້ອນວ່າມັນເປັນການປົກປັກຮັກສາຮີດຄອງປະເພນີ ທີ່ເປັນເອກະລັກ ແລະ ຊຸກຍູ້ການທ່ອງທ່ຽວນໍາອີກ.

ແກ້ວ ໄຊຍະວົງ (2016) ໄດ້ສຶກສາບົດຂັບ ສະຫຼາງ-ສາມສ້າວ ຂອງບ້ານລາດຫານ ເມືອງງາ ແຂວງອຸດົມໄຊ, ຈຸດປະສົງຂອງການຄົ້ນຄວ້າແມ່ນເພື່ອສຶກສາເນື້ອໃນຂອງກອນຂັບສະຫຼາງ-ສາມສ້າວ, ຜົນການສຶກສາເນື້ອໃນຂອງຂັບສະຫຼາງ-ສາມສ້າວມັນໄດ້ສະແດງອອກໃຫ້ເຮົາເຫັນຄວາມຮັກລະຫວ່າງບ່າວ-ສາວທີ່ມີການພົວພັນເຊິ່ງກັນແລະກັນ ໂດຍໃຊ້ຄໍາເວົ້າສຽດສີ ດ້ວຍການເວົ້າຄາລົມຢອກໄຍກັນພ້ອມທັງຍ້ອງຍໍ ແລະ ຍົກສູງຄວາມງາມຂອງແມ່ຍິງ, ເພື່ອເປັນການກ່າວເຖິງຄວາມງາມຂອງຮູບຮ່າງພາຍນອກ, ງາມທັງຈິດໃຈ ແລະ ເປັນການປຽບທຽບຖານະລະຫວ່າງບ່າວ-ສາວ ເພື່ອເປັນການເວົ້າເຖິງຄວາມຮັກທີ່ມີອຸປະສັກຕ່າງໆ ແລະ ຄວາມທຸກຈົນດ້ານຖານະເຊິ່ງບົດຂັບສະຫຼາງ-ສາມສ້າວລ້ວນແລ້ວແຕ່ມີເນື້ອໃນທີ່ສະແດງເຖິງຄວາມຮັກຂອງບ່າວ-ສາວເຊິ່ງສະຫຼຸບລວມແລ້ວຜົນຂອງການສຶກສາ ແລະ ປຽບທຽບກັບສົມມຸດຖານເຫັນວ່າ ກົງກັບຈຸດປະສົງເປົ້າໝາຍທີ່ກໍານົດໄວ້.

ໝອນ ຄຸດທະວົງ (2017) ການສຶກສາສິລະປະການປະດິດແຕ່ງໃນປຶ້ມບົດ "ອ່ານໜັງສືຫຼວງພະບາງ" ຂອງຫຸມພັນ ຣັດຕະນະວົງ (1998) ຄັ້ງນີ້ທາງຜູ້ສຶກສາມີຈຸດປະສົງເພື່ອສຶກສາສິລະປະການປະດິດແຕ່ງ ໂດຍສະເພາະລັກສະນະການສໍາຜັດ ແລະ ສຶກສາເນື້ອໃນປຶ້ມບົດ "ອ່ານໜັງສືຫຼວງພະບາງ" ຂອງຫຸມພັນ ຣັດຕະນະວົງ (1998); (ຕອນອ່ານໜັງສື ອວຍພອນລະຫວ່າງຊຽງສີລາ ແລະ ນາງແກ້ວ) ໃນຂອບເຂດຂອງການສຶກສາໃນຄັ້ງນີ້ແມ່ນໄດ້ເນັ້ນໃສ່ການວິເຄາະສິລະປະການປະດິດແຕ່ງໂດຍໄດ້ສຶກສາສະເພາະລັກສະນະການສໍາຜັດ ແລະ ສຶກສາເນື້ອໃນ ໃນປຶ້ມບົດ "ອ່ານໜັງສືຫຼວງພະບາງ" ເທົ່ານັ້ນ.

ຜ່ານການສຶກສາບົດ "ອ່ານໜັງສືຫຼວງພະບາງ" ສາມາດສະຫຼຸບໄດ້ວ່າ: ສິລະປະການປະດິດແຕ່ງ ຜົນການສຶກສາພົບວ່າ ຜູ້ແຕ່ງແມ່ນໄດ້ນໍາໃຊ້ການປະດິດແຕ່ງແບບປະສົມປະສານເຊິ່ງສາມາດຈໍາແນກການສໍາຜັດອອກເປັນ 2 ຊະນິດ ຄື: ສໍາຜັດໃນ ແລະ ສໍາຜັດນອກ ລວມມີບ່ອນສໍາຜັດທັງໝົດ 90 ບ່ອນ. ໃນນັ້ນ, ການສໍາຜັດທີ່ນັກແຕ່ງໄດ້ໃຊ້ຫຼາຍກວ່າໝູ່ແມ່ນການສໍາຜັດໃນໂດຍສະເພາະແມ່ນສໍາຜັດພະຍັນຊະນະ ແບບລຽນອັກສອນ. ເນື້ອໃນສ່ອງແສງເຖິງບົດ "ອ່ານໜັງສືຫຼວງພະບາງ" ລວມມີເນື້ອໃນຢູ່ 2 ບັນຫາຕົ້ນຕໍ ຄື: ເນື້ອໃນເວົ້າເຖິງການພົວພັນຄວາມຮັກລະຫວ່າງບ່າວ-ສາວ, ເນື້ອໃນເວົ້າເຖິງການພົວພັນສັງຄົມເຊິ່ງໃນບົດອ່ານໜັງສືຫຼວງພະບາງເນື້ອໃນທີ່ເວົ້າເຖິງການພົວພັນສັງຄົມຈະມີຢູ່ 2 ແງ່ ຄື: ເນື້ອໃນສ່ອງແສງເຖິງຄວາມເຊື່ອຖື, ເນື້ອໃນສ່ອງແສງເຖິງການອວຍພອນ. ໃນນັ້ນເຫັນວ່າ ເນື້ອໃນສ່ອງແສງເຖິງການອວຍພອນຈະປາກົດເຫັນຫຼາຍກວ່າໝູ່. ໃນການສຶກສາສິລະປະການປະດິດແຕ່ງ ແລະ ເນື້ອໃນຂອງບົດ "ອ່ານໜັງສືຫຼວງພະບາງ" ໃນຄັ້ງນີ້ ແມ່ນມີຄວາມສໍາຄັນຕໍ່ກັບວັດທະນະທໍາຊາວຫຼວງພະບາງ ແລະ ເປັນປະໂຫຍດໃຫ້ແກ່ຜູ້ທີ່ສົນໃຈຈະສຶກສາຄົ້ນຄວ້າຮໍ່າຮຽນ. ໄດ້ຮັບຮູ້ເຂົ້າໃຈເຖິງຫຼັກການສໍາ ຜັດ, ການໄຈ້ແຍກເນື້ອໃນສ່ອງແສງເຖິງຫຼາຍບັນຫາໃນບົດ "ອ່ານໜັງສືຫຼວງພະບາງ". ການສຶກສາຄົ້ນຄວ້າໃນຄັ້ງນີ້ ກໍເປັນການອະນຸລັກຮັກສາ ແລະ ສົ່ງເສີມໃຫ້ວັດທະນະທໍາອັນດີງາມຢູ່ຄຽງຄູ່ຊາວນະຄອນຫຼວງພະບາງຕະຫຼອດໄປ.

ປານີ ນໍລິນ (2017) ໄດ້ສຶກສາຄໍາຮຽກຊື່ທ່າຟ້ອນນາງແກ້ວຂອງຫຼວງພະບາງ. ຈຸດປະສົງເພື່ອສຶກສາລັກສະນະຂອງຄໍາຮຽກຊື່ທ່າຟ້ອນທີ່ເທດສະບານເມືອງຫຼວງພະບາງ ແຂວງຫຼວງພະບາງ ແລະ ໂຄງສ້າງຂອງຄໍາຮຽກຊື່ທ່າຟ້ອນ ທີ່ເທດສະບານເມືອງຫຼວງພະບາງ ແຂວງຫຼວງພະບາງ. ນໍາໃຊ້ວິທີການຄົ້ນຄວ້າແບບປະລິມານ ຜົນການສຶກສາພົບວ່າ ຄໍາຮຽກຊື່ທ່າຟ້ອນມີທັງໝົດຈໍານວນ 17 ຊື່ທ່າຟ້ອນສາມາດແບ່ງອອກເປັນ 5 ລັກສະນະ ຄື: ຄໍາຮຽກຊື່ທ່າຟ້ອນທີ່ມີໜຶ່ງໜ່ວຍຄໍາມີທັງໝົດຈໍານວນ 1 ໜ່ວຍຄໍາຄິດໄລ່ເທົ່າກັບ 5.88 %; ຄໍາຮຽກຊື່ທ່າຟ້ອນທີ່ມີສອງໜ່ວຍຄໍາມີ 3 ຊື່ທ່າຟ້ອນຄິດໄລ່ເທົ່າກັບ 17.64 %; ຄໍາຮຽກຊື່ທ່າຟ້ອນທີ່ມີສາມໜ່ວຍຄໍາມີ 10 ຊື່ທ່າຟ້ອນຄິດໄລ່ເທົ່າກັບ 58.82 %; ຄໍາຮຽກຊື່ທ່າຟ້ອນທີ່ມີສີ່ໜ່ວຍຄໍາ ມີ 2 ຊື່ທ່າຟ້ອນຄິດໄລ່ເທົ່າກັບ 11.76 % ແລະ ຄໍາຮຽກຊື່ທ່າຟ້ອນທີ່ມີຫົກໜ່ວຍຄໍາ ມີ 1 ຊື່ທ່າຟ້ອນຄິດໄລ່ເທົ່າກັບ 5.88 %.ໂຄງສ້າງຄໍາຮຽກຊື່ທ່າຟ້ອນສອງໜ່ວຍຂຶ້ນໄປມີ 16 ຊື່ທ່າຟ້ອນ; ຄໍາຮຽກຊື່ທ່າຟ້ອນທີ່ມີສອງໜ່ວຍຄໍາມີ 3 ຊື່ທ່າຟ້ອນຄິດໄລ່ເທົ່າກັບ 18.75 %; ຄໍາຮຽກຊື່ທ່າຟ້ອນທີ່ມີສາມໜ່ວຍຄໍາ ມີ 10 ຊື່ທ່າຟ້ອນຄິດໄລ່ເທົ່າກັບ 62.5 %; ຄໍາຮຽກຊື່ທ່າຟ້ອນທີ່ມີສີ່ໜ່ວຍຄໍາມີ 2 ຊື່ທ່າຟ້ອນຄິດໄລ່ເທົ່າກັບ 12.5 %; ຄໍາຮຽກຊື່ທ່າຟ້ອນທີ່ມີຫົກໜ່ວຍຄໍາ ມີ 1 ຊື່ທ່າຟ້ອນຄິດໄລ່ເທົ່າກັບ 6.25 %.

ນາງສາວ ອຸສະນີ ເພີ່ມດີ (2015) ໄດ້ສຶກສາການສື່ສານເພື່ອອະນຸລັກຫຸ່ນລະຄອນນ້ອຍໂຈຫຼຸຍ ໂດຍມີຈຸດປະສົງເພື່ອສຶກສາ 1) ພັດທະນາການຫຸ່ນລະຄອນນ້ອຍໂຈຫຼຸຍ 2) ຂະບວນການສື່ສານຂອງຫຸ່ນລະຄອນນ້ອຍໂຈຫຼຸຍ 3) ແນວທາງການອະລັກຫຸ່ນລະຄອນນ້ອຍໂຈຫຼຸຍ ເປັນການວິໄຈໃນທາງຄຸນນະພາບຜູ້ໃຫ້ຂໍ້ມູນຫຼັກປະກອບດ້ວຍ ຜູ້ສ່ຽວຊານດ້ານການສະແດງຫຸ່ນລະຄອນນ້ອຍຈໍານວນ 8 ຄົນ ຜູ້ຊົມການສະແດງຈໍານວນ 7 ຄົນ ແລະ ນັກວິຊາການຈໍານວນ 2 ຄົນ ໂດຍການເລືອກແບບເຈາະຈົງເຄື່ອງມືທີ່ໃຊ້ໃນການວິໄຈຄື ແບບສໍາພາດ, ວິເຄາະຂໍ້ມູນໂດຍການ

ພິຈາລະນາວິເຄາະ. ຜົນການວິໄຈພົບວ່າ 1) ພັດທະນາການຂອງຫຸ່ນລະຄອນນ້ອຍໂຈຫຼຸຍສາມາດແບ່ງອອກເປັນຍຸກຕ່າງໆ ຄື: ຍຸກກໍ່ຕັ້ງ, ຍຸກຕໍ່ສູ້, ຍຸກເຟື່ອງຟູ, ຍຸກຊົບເຊົາ ແລະ ຍຸກພື້ນຟູເຊິ່ງແຕ່ລະຍຸກລ້ວນແຕ່ເປັນອົງປະກອບສຳຄັນ ທີ່ກໍ່ໃຫ້ເກີດຫຸ່ນລະຄອນນ້ອຍໂຈຫຼຸຍໃນປັດຈຸບັນ 2) ຂະບວນການສື່ສານຫຸ່ນລະຄອນນ້ອຍໂຈຫຼຸຍ ປະກອບດ້ວຍຜູ້ສົ່ງສານໄດ້ແກ່ ສິລະປິນຜູ້ສະແດງຫຸ່ນລະຄອນນ້ອຍໂຈຫຼຸຍ ສານເປັນເນື້ອຫາຈາກວັນນະຄະດີ ຫຼື ເນື້ອຫາທີ່ມີການອອກແບບໃຫ້ເປັນສາກົນ ແລະ ມີການຮ່ວມສະໄໝຍິ່ງຂຶ້ນ ຊ່ອງທາງໃນການສະແດງ ແລະ ສື່ໄດ້ຂະຫຍາຍຊ່ອງທາງຈາກເດີມເຄີຍເປັນພຽງການສະແດງສົດພຽງຢ່າງດຽວ ໃຫ້ມີການບັນທຶກວິຊີດີ, ການຖ່າຍທອດເຜີຍແຜ່ ແລະ ປະຊາສຳພັນຜ່ານສື່ຕ່າງໆ ຜູ້ຮັບສານໄດ້ແກ່ ກຸ່ມຜູ້ຊົມທຸກຊ່ວງໄວ 3) ແນວທາງການອະນຸລັກຫຸ່ນລະຄອນນ້ອຍໂຈຫຼຸຍ ແບ່ງອອກເປັນ 2 ແນວທາງຄື: ແນວທາງການອະນຸລັກແບບດັ້ງເດີມເຊິ່ງເປັນການອະນຸລັກເພື່ອດຳລົງຄຸນຄ່າສິລະປະວັດທະນະທຳຂອງການສະແດງລະຄອນນ້ອຍໂຈຫຼຸຍໃຫ້ຄົງຢູ່ໂດຍບໍ່ມີການປັບປ່ຽນຮູບແບບ ແລະ ແນວທາງການອະນຸລັກດ້ວຍການສ້າງສັນຮູບແບບໃໝ່ໃຫ້ການສະແດງຫຸ່ນລະຄອນນ້ອຍໂຈຫຼຸຍ ໃນຮູບແບບຂອງນາຕະກຳຫຸ່ນລະຄອນນ້ອຍເທິງລານນ້ຳແຂງ ຫຼື "ໂຕຫຼຸຍອອນລາຍ" ເພື່ອໃຫ້ສອດຄ່ອງກັບການປ່ຽນແປງທາງສັງຄົມ ແລະ ຂະຫຍາຍຖານຜູ້ຊົມຮຸ່ນໃໝ່.

ສຸທິຣາ ອະທະວິງສາ (2017) ໄດ້ສຶກສາການສືບທອດວັດທະນະທຳ ການຟ້ອນສາວໄໝ ແລະ ແນວທາງການພັດທະນາໃຫ້ເປັນຜະລິດຕະພັນບໍລິການ ການຕະຫຼາດເພື່ອສັງຄົມ ໂດຍມີຈຸດປະສົງ ເພື່ອສຶກສາການດຳລົງຢູ່ທາງວັດທະນະທຳຂອງຊຸມຊົນເພື່ອພື້ນຟູ ແລະ ຫາແນວທາງການສືບທອດວັດທະນະທຳການຟ້ອນສາວໄໝສູ່ກຸ່ມຄົນ 3 ໄວອາຍຸ ແລະ ຄົ້ນແນວທາງການພັດທະນາການຟ້ອນໃຫ້ເປັນຜະລິດຕະພັນ ການບໍລິການ ການຕະຫຼາດເພື່ອສັງຄົມຂອງຊຸມຊົນ ພື້ນທີ່ເທດສະບານຕຳບົນສີຣິວຽງໄຊ ອຳເພີວຽງໄຊ ຈັງຫວັດຊຽງຮາຍ ໂດຍນຳໃຊ້ວິທີການວິໄຈໃນທາງປະຕິບັດການແບບມີສ່ວນຮ່ວມ ຜົນການວິໄຈພົບວ່າ ຊຸມຊົນໃນພື້ນທີ່ມີການສະແດງອອກເຖິງວັດທະນະທຳຂອງທ້ອງຖິ່ນທີ່ຫຼາກຫຼາຍ ສ່ວນໃຫຍ່ລ້ວນເປັນກິດຈະກຳທີ່ກ່ຽວຂ້ອງກັບປະເພນີ ແລະ ກິດຈະກຳທາງພຸດທະສາສະໜາ ສຳລັບການຟື້ນຟູ ແລະ ຫາແນວທາງສືບທອດວັດທະນະທຳການຟ້ອນສາວໄໝສູ່ກຸ່ມຄົນ 3 ໄວຂອງຊຸມຊົນພົບວ່າ ການພັດທະນາຮູບແບບ ແລະ ທັກສະການຟ້ອນ, ການສອນ ແລະ ການເຝິກອົບຮົມເປັນການຖ່າຍທອດພູມປັນຍາຄວາມຮູ້ທີ່ໃຫ້ຜົນໃນທາງປະຈັກ ສ່ວນແນວທາງການພັດທະນາລະບົບການບໍລິຫານຈັດການກຸ່ມ ໂດຍມີການສະແດງຟ້ອນເປັນຜະລິດຕະພັນບໍລິການການຕະຫຼາດເພື່ອສັງຄົມໃນການເຜີຍແຜ່ວັດທະນະທຳການຟ້ອນຂອງທ້ອງຖິ່ນໃຫ້ດຳລົງຄົງຢູ່ສືບຕໍ່ໄປ.

ຮຸ່ງທິບ ສຸວັນນະສະຖິດ ແລະ ກິດສະໜາ ໄອສຳລວດ (2019) ໄດ້ສຶກສາການສົ່ງເສີມ ແລະ ການອະນຸລັກ ສິລະປະການສະແດງມະໂນລາຂອງອົງກອນປົກຄອງສ່ວນທ້ອງຖິ່ນ ຈັງຫວັດນະຄອນສີທຳມະລາດ ໂດຍມີຈຸດປະສົງ 1) ເພື່ອສຶກສາສະພາບການ ແລະ ປາກົດການດ້ານການສົ່ງເສີມ ແລະ ການອະນຸລັກສິລະປະການສະແດງມະໂນລາ ຂອງອົງກອນປົກຄອງສ່ວນທ້ອງຖິ່ນຈັງຫວັດນະຄອນສີທຳມະລາດ, 2) ເພື່ອລວບຮວມບັນຫາ, ອຸປະສັກຕໍ່ການດຳເນີນງານການສົ່ງເສີມ ແລະ ການອະນຸລັກສິລະປະການສະແດງມະໂນລາຂອງອົງກອນປົກຄອງສ່ວນທ້ອງຖິ່ນຈັງຫວັດນະຄອນສີທຳມະລາດ ໂດຍນຳໃຊ້ວິທີການຄົ້ນຄວ້າແບບຄຸນນະພາບ ຜົນການສຶກສາພົບວ່າ ມະໂນລາເປັນສິລະປະການສະແດງພື້ນບ້ານ ອັດຕະລັກປະຈຳຈັງຫວັດພາກໃຕ້ ທີ່ຄົນພາກໃຕ້ສືບທອດມາຕັ້ງແຕ່ສະໄໝບູຮານ ເປັນການສະແດງລະຄອນຊາຕຣີມີສິລະປະແມ່ບົດ, ທ່າຟ້ອນ, ປະກອບດົນຕີ, ກອງ, ທັບຄູ່, ສິ່ງໂໝ່ງ, ປີ່ຊະວາ, ທີ່ຜູ້ສະແດງສາມາດປະຍຸກທ່າຟ້ອນ ດ້ວຍຈິນຕະນາການຂອງຕົນຕາມສຽງເລົ້າຈາກດົນຕີ ເປັນທ່າຟ້ອນທີ່ງົດງາມເຊິ່ງສິລະປະການສະແດງມະໂນລາມີການອະນຸລັກດ້ວຍການຖ່າຍທອດຄວາມຮູ້ໂດຍຄູໂນລາ ຜ່ານຄວາມເຊື່ອ ແລະ ພິທີກຳການສືບສານອະນຸລັກແບບຮັບຊ່ວງຕໍ່ກັນມາຢ່າງເຄັ່ງຄັດປາສະຈາກການບັນທຶກເປັນລາຍລັກອັກສອນເຊິ່ງຜູ້ສືບສານຕໍ່ການເຝິກຫັດສ່ວນຫຼາຍເປັນຄົນໃນຄອບຄົວອະນຸລັກສືບສານກັນມາຕາມຊ່ວງອາຍຸຄົນ ສະພາບການດ້ານການສົ່ງເສີມ ແລະ ອະນຸລັກສິລະປະການສະແດງມະໂນລາ ຂອງອົງກອນປົກຄອງສ່ວນທ້ອງຖິ່ນ ຈັງຫວັດນະຄອນສີທຳມະລາດ ການຈັດສັນງົບປະມານເພື່ອກິດຈະກຳ ແລະ ໂຄງການອະນຸລັກວັດທະນະທຳ ອາດຕ້ອງພິຈາລະນາເລື່ອງຄວາມສົມດູນປະຊາຊົນຄົນຮຸ່ນໃໝ່ ມີຄວາມເຂົ້າໃຈ ແລະ ຍອມຮັບຄ່ານິຍົມແຕກຕ່າງກັນຕໍ່ສິລະປະທາງວັດທະນະທຳດັ້ງເດີມໃນທາງປະຕິບັດພົບວ່າ ຄວາມພ້ອມໃນການຈັດການຮຽນ-ການສອນຕາມລະບົບຍັງມີຂໍ້ຈຳກັດຢູ່ຫຼາຍ ເຮັດໃຫ້ການບັນຈຸຫຼັກສູດການຮຽນ-ການສອນມະໂນລາ ເພື່ອເປັນການສົ່ງເສີມ ແລະ ອະນຸລັກສິລະປະການສະແດງມະໂນລາ ບໍ່ສາມາດເຮັດໄດ້ເທົ່າທີ່ຄວນ ຈັງຫວັດນະຄອນສີທຳມະລາດອາດກຳນົດນະໂຍບາຍການສົ່ງເສີມ ແລະ ການອະນຸລັກສິລະປະການສະແດງມະໂນລາ ເພື່ອສົ່ງເສີມສິລະປະການສະແດງມະໂນລາຂອງອົງກອນປົກຄອງສ່ວນທ້ອງຖິ່ນ ໂດຍໃຊ້ສະຖານສຶກສາເປັນເຄື່ອງມືໃນການສົ່ງເສີມ ແລະ ອະນຸລັກສິລະປະການສະແດງມະໂນລາຂອງອົງກອນປົກຄອງສ່ວນທ້ອງຖິ່ນ ໂດຍບູລະນາການແນວຄິດປະຊາລັດ ແລະ ນິຕິລັດເຂົ້າດ້ວຍກັນ ເພື່ອປັບແຜນ

ພັດທະນາທ້ອງຖິ່ນຂອງຈັງຫວັດນະຄອນສີທຳມະລາດໃຫ້ເປັນຮູບປະທຳ ເພື່ອການສົ່ງເສີມ ແລະ ອະນຸລັກສີລະປະມະໂນລາໃຫ້ຍັງຄົງຄຸນຄ່າ, ຄວາມສັດທາ, ຄວາມນິຍົມ ສືບຕໍ່ໄປຢ່າງຍັ້ງຢືນ

## 3. ວິທີດຳເນີນການຄົ້ນຄວ້າ

ການຄົ້ນຄວ້າໃນຄັ້ງນີ້ກຸ່ມຜູ້ຄົ້ນຄວ້າໄດ້ນຳໃຊ້ວິທີການຄົ້ນຄວ້າແບບຄຸນນະພາບ ແບບມີໂຄງສ້າງແບບໃຊ້ຄຳຖາມສຳພາດ ໂດຍນຳໃຊ້ທິດສະດີຂອງທ່ານ (ທ່ານ Creswell, 2014).

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ການຄົ້ນຄວ້າຄັ້ງນີ້ເປັນການຄົ້ນຄວ້າແບບຄຸນນະພາບ. ສະນັ້ນ, ຈຶ່ງໄດ້ມີຄັດເລືອກເອົາຜູ້ໃຫ້ຂໍ້ມູນຫຼັກແບບເຈາະຈົງເອົາສະເພາະຜູ້ທີ່ມີຄວາມຮູ້, ຄວາມສາມາດກ່ຽວກັບສີລະປະການສະແດງທີ່ເປັນເອກະລັກທ້ອງຖິ່ນຂອງຊາວຫຼວງພະບາງ ເຊິ່ງປະກອບມີພະນັກງານຜູ້ທີ່ເຮັດວຽກກ່ຽວທີ່ກ່ຽວຂ້ອງກັບສີລະປະການສະແດງຂັ້ນພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວແຂວງ ແລະ ບັນດາເມືອງຕ່າງໆທີ່ກ່ຽວ ຂ້ອງ, ຜູ້ມີຄວາມຊຳນານດ້ານການສະແດງເຊິ່ງມີນັກສະແດງຮຸ່ນອາວຸໂສ ແລະ ນັກສະແດງຮຸ່ນສືບທອດ ລວມທັງໝົດມີ 25 ຄົນ. ຍິງ 14 ຄົນ ຊາຍ 11 ຄົນ.

*3.2 ວິທີການເກັບກຳຂໍ້ມູນ*

ການເກັບກຳຂໍ້ມູນໃນການຄົ້ນຄວ້າ ແບບວິທີຄຸນນະພາບ ມີ 4 ປະເພດເປັນພື້ນຖານ ເຊັ່ນ ການສັງເກດ, ການສຳພາດ, ການເກັບກຳເອກະສານ, ການບັນທຶກສຽງ ແລະ ພາບ (ທ່ານ Creswell, 2014).

ໃນການຄົ້ນຄວ້າຄັ້ງນີ້, ໄດ້ມີການເກັບຂໍ້ມູນ 2 ແບບ ຄື: ເກັບຂໍ້ມູນຈາກເອກະສານ ແລະ ເກັບຂໍ້ມູນຈາກການສຳພາດ ນຳໃຊ້ຮູບແບບການສຳພາດເທື່ອລະຄົນ ແລະ ເປັນກຸ່ມຄະນະ ໂດຍມີຮ່າງຄຳຖາມ. ການສຳພາດແບບມີຮ່າງຄຳຖາມ ແມ່ນຮັບປະກັນການສຳພາດທີ່ມີປະສິດພາບ (Patton, 1990). ຄະນະນັກຄົ້ນຄວ້າ ສ້າງ 7 ຄຳຖາມຫຼັກໃນການສຳພາດເຊິ່ງແບ່ງອອກເປັນ 2 ສ່ວນ ຄື: ສ່ວນທີ 1 ຂໍ້ມູນທົ່ວໄປກ່ຽວກັບຜູ້ໃຫ້ສຳພາດ; ສ່ວນທີ 2 ຄຳຖາມຫຼັກໃນການສຳພາດ ແລະ ມີຄຳຖາມເຈາະຈີ້ມສະເພາະມີ 10 ຂໍ້ (ເບິ່ງພາກຜະໜວກ I); ການສຳພາດໄດ້ດຳເນີນໃນວັນທີ 26 ເດືອນມີນາ ຫາ ວັນທີ 7 ເມສາ ປີ 2024. ສ່ວນສະຖານທີ່ສຳພາດນັ້ນແມ່ນໄດ້ສຳພາດຢູ່ເຮືອນຂອງນັກຂັບ, ສຳພາດຢູ່ເຮືອນຂອງຫົວໜ້າວົງລະຄອນຕຸກກະຕາອີ່ປ໊ອກທີ່ຢູ່ໃກ້ກັບວັດຊຽງທອງ, ສຳພາດຫົວໜ້າໂຮງລະຄອນພະລັກພະລາມ ແລະ ສະມາຊິກໃນໂຮງລະຄອນຢູ່ເຮືອນຂອງເພິ່ນເອງ, ສຳພາດນັກສະແດງຢູ່ໂຮງລະຄອນພະລັກພະລາມທີ່ຕັ້ງຢູ່ໃນພະລາດຊະວັງ, ສຳພາດຜູ້ຊຳນານການດ້ານການຟ້ອນນາງແກ້ວຢູ່ເຮືອນຂອງເພິ່ນເອງ, ສຳພາດຜູ້ທີ່ເຮັດວຽກທີ່ກ່ຽວຂ້ອງກັບການສະແດງພື້ນເມືອງຢູ່ຫ້ອງການຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວຂອງແຂວງ ແລະ ຂອງເມືອງ ຄື: ເມືອງຈອມເພັດ ແລະ ນະຄອນຫຼວງພະບາງ. ໃນການສຳພາດແຕ່ລະທ່ານໃຊ້ເວລາສະເລ່ຍປະມານ 30-40 ນາທີ ໃນການຊັກຖາມ ແລະ ເຈາະຈີ້ມບັນຫາ.

ຕາຕະລາງ 1: ຂໍ້ມູນການສຳພາດ

| ລດ | ວັນທີສຳພາດ | ຜູ້ຖືກສຳພາດ | ສະຖານທີ່ | ເວລາ |
|---|---|---|---|---|
| 1 | 27 ມີນາ 2024 | ຜູ້ຊຳນານດ້ານການຂັບທຸ້ມ | ບ້ານ ຊຽງແມນ | 40 ນາທີ |
| 2 | 28 ມີນາ 2024 | ຜູ້ຊຳນານດ້ານການຂັບທຸ້ມ | ບ້ານ ດອນໃໝ່ | 40 ນາທີ |
| 3 | 29 ມີນາ 2024 | ຜູ້ອາວຸໂສຊຳນານດ້ານການຟ້ອນແກ້ວ | ບ້ານ ວິຊຸນ | 40 ນາທີ |
| 4 | 30 ມີນາ 2024 | ຫົວໜ້າໂຮງລະຄອນພະລັກພະລາມ | ບ້ານ ວຽງແກ້ວ | 40 ນາທີ |
| 5 | 31 ເມສາ 2024 | ນັກສະແດງຟ້ອນພະລັກພະລາມ | ບ້ານ ປ່າຂ່າມ | 30 ນາທີ |
| 6 | 1 ເມສາ 2024 | ນັກສະແດງການຟ້ອນນາງແກ້ວ | ບ້ານ ປ່າຂ່າມ | 30 ນາທີ |
| 7 | 2 ເມສາ 2024 | ຜູ້ຊຳນານໃນການຜະລິດຮຸ່ນອີ່ປ໊ອກ | ບ້ານ ຊຽງທອງ | 40 ນາທີ |
| 8 | 3 ເມສາ 2024 | ຜູ້ຊຳນານໃນການສະແດງຮຸ່ນອີ່ປ໊ອກ | ບ້ານ ຊຽງທອງ | 40 ນາທີ |
| 9 | 4 ເມສາ 2024 | ຜູ້ເຮັດວຽກທີ່ກ່ຽວຂ້ອງກັບການສະແດງພື້ນເມືອງ | ຢູ່ຫ້ອງການເມືອງຈອມເພັດ | 30 ນາທີ |
| 10 | 5 ເມສາ 2024 | ຜູ້ເຮັດວຽກທີ່ກ່ຽວຂ້ອງກັບການສະແດງພື້ນເມືອງ | ຢູ່ຫ້ອງການຖວທ ນະຄອນຫຼວງພະບາງ | 30 ນາທີ |
| 11 | 6 ເມສາ 2025 | ຜູ້ເຮັດວຽກທີ່ກ່ຽວຂ້ອງກັບການສະແດງພື້ນເມືອງແຂວງ | ຢູ່ຫ້ອງການຖວທ ແຂວງ | 30 ນາທີ |

ສຳລັບພິທີການສຳພາດ ຄະນະນັກຄົ້ນຄວ້າມີການປະສານງານກັບຜູ້ເຂົ້າຮ່ວມ, ມີການກະກຽມອຸປະກອນຈຳເປັນ, ຈັດກຽມຂັ້ນຕອນການສຳພາດ, ໃຫ້ຄຳແນະນຳ ແລະ ທົດສອບຄຳ

ຖາມສຳພາດ, ມີການສົ່ງໜັງສືປະຕິຍານ ໃຫ້ຜູ້ເຂົ້າຮ່ວມສຳພາດໄດ້ລົງລາຍເຊັນ ແລະ ສົ່ງໜັງສືປະຕິຍານຄືນໃຫ້ແກ່ນັກຄົ້ນຄວ້າ ເພື່ອຮັບປະກັນໃຫ້ແກ່ການສຳພາດ.

ໃນການສຳພາດແມ່ນໃຊ້ຮູບແບບສອບຖາມແບບເຊິ່ງໜ້າ ມີການສຳພາດແບບດ່ຽວ ແລະ ເປັນກຸ່ມ ການສຳພາດການຂັບທຸ້ມແມ່ນ ສຳພາດເປັນກຸ່ມມີສອງກຸ່ມກຸ່ມໜຶ່ງຈະມີ 3 ຄົນ, ກຸ່ມສອງມີ 6 ຄົນ, ການສຳພາດຟ້ອນນາງແກ້ວ ມີແບບດ່ຽວ ແລະ ແບບກຸ່ມ, ແບບກຸ່ມມີ 6 ຄົນ, ສຳພາດຟ້ອນພະລັກພະລາມມີແບບດ່ຽວ ແລະ ແບບກຸ່ມ, ແບບກຸ່ມມີ 5 ຄົນ, ສຳພາດຜູ້ສະແດງອີປ໋ອກ ແມ່ນສຳພາດດ່ຽວ,ສຳພາດຜຸ້ທີ່ເຮັດວຽກກ່ຽວກັບການສະແດງພືນເມືອງ ສຳພາດແບບດ່ຽວ.

ໃນການສຳພາດທີມງານຈະມີການສຳພາດຕາມແບບຟອມແບບສອບຖາມຫຼັກມີ 7 ຄຳຖາມຈະມີການຈົດບັນທຶກຂໍ້ມູນລະອຽດ ມີເຄື່ອງບັນທຶກຂໍ້ມູນມີການແກະບົດສຳພາດອອກມາວິເຄາະແບບບັນລະຍາຍ, ຂະໜາດການບັນທຶກ ມີ 11 ໄຟລ໌.

***3.3*** *ວິທີການວິເຄາະຂໍ້ມູນແບບຄຸນນະພາບ*

ການວິເຄາະຂໍ້ມູນແບບຄຸນນະພາບ ແມ່ນອີງໃສ່ 4 ຂັ້ນຕອນຂອງການວິເຄາະຂໍ້ມູນ ແບບຄຸນນະພາບ ແນະນຳໂດຍ ທ່ານ Cresswell (2014) ດັ່ງນີ້:

ຂັ້ນຕອນທີ 1. ຈັດກຸ່ມ ແລະ ກະກຽມຂໍ້ມູນເພື່ອວິເຄາະ. ລວມມີການຂຽນບົດສຳພາດອອກຈາກເຄື່ອງອັດສຽງ, ກວດເບິ່ງອຸປະກອນ, ພິມບົດບັນທຶກພາກສະໜາມ, ຈັດປະເພດ ແລະ ຈັດລຽນຂໍ້ມູນເປັນໝວດແຕກຕ່າງຕາມປະເພດຕ່າງໆ.

ຂັ້ນຕອນທີ 2. ອ່ານ ຫຼື ກວດເບິ່ງຂໍ້ມູນທັງໝົດ. ທຳຄວາມເຂົ້າໃຈພາບລວມຈາກຂໍ້ມູນ ແລະ ນຶກຄິດເຖິງຄວາມໝາຍລວມ.

ຂັ້ນຕອນທີ 3. ໃສ່ລະຫັດຂໍ້ມູນທັງໝົດ. ການໃສ່ລະຫັດແມ່ນຂະບວນການຈັດໝວດຂໍ້ມູນ ໂດຍການ ແຍກປະໂຫຍກຄຳເວົ້າ ເປັນວັກແຕ່ລະຢ່າງ (ແຍກອອກເປັນເລື່ອງ) ແລະ ຂຽນຄຳສັບເປັນຄຳແທນຊື່ໝວດຂອງຂໍ້ມູນໃສ່ໃນຫວ່າງຂອບເຈ້ຍ. ການວິເຄາະລວມມີການແຍກອອກເປັນປະໂຫຍກ ຫຼື (ເປັນວັກ) ໃຫ້ເປັນໝວດຄວາມ ແລະ ໃສ່ຊື່ (labeling) ໝວດ.

ຂັ້ນຕອນທີ 4. ຂຽນບົດອະທິບາຍການສຳພາດ ຮູບແບບເລົ່າເລື່ອງ. ສຳລັບການຄົ້ນຄວ້າຄັ້ງນີ້, ມີການຈັດແບ່ງຄຳຕອບຈາກຄຳຖາມສຳພາດ ເປັນ **7** ຫົວເລື່ອງ (themes) ຫຼື ໝວດ (patterns).

## 4. ຜົນການຄົ້ນຄວ້າ

*4.1 ປະເພດ ແລະ ປະຫວັດຄວາມເປັນມາຂອງສິລະປະການສະແດງພື້ນເມືອງທີ່ເປັນເອກະລັກຂອງແຂວງຫຼວງພະບາງ*

ຜົນການຄົ້ນຄວ້າພົບວ່າ ສິລະປະການສະແດງພື້ນເມືອງທີ່ເປັນເອກະລັກຂອງແຂວງຫຼວງພະບາງປະກອບມີ 3 ປະເພດຄື: ການຂັບ, ການຟ້ອນ ແລະ ການສະແດງລະຄອນ. ສິລະປະການສະແດງແຕ່ລະປະເພດມີປະຫວັດຄວາມເປັນມາດັ່ງນີ້:

1) ການຂັບ: ຂັບປະກອບມີ ຂັບທຸ້ມ, ອ່ານໜັງສື, ຂັບສະຫຼາງ-ສາມສ້າວ, ສອງຄອນລອດໄຄ້, ມ້າຍ່ອງ, ນາກສະດຸ້ງ, ຂັບງ້ອມ, ຂັບດອກດິນ ແລະ ຂັບເສືອເຂົ້າເລົ່າ. ຈາກການສຳພາດຂອງນັກຂັບຮຸ່ນອາວຸໂສ ແລະ ຮຸ່ນຜູ້ສືບທອດ ສາມາດສັງລວມໄດ້ວ່າມີສີ່ທັດສະນະຄື ທັດສະນະທີໜຶ່ງບອກໃຫ້ຮູ້ວ່າ ການຂັບແມ່ນກຳເນີດມາຈາກໄມ້ໄຜ່ສຽດສີກັນໄປຕາມຈັງຫວະຂອງລົມ ແລະ ທັດສະນະທີສອງແມ່ນກຳເນີດມາຈາກການຢູ່ຮ່ວມກັນເປັນກຸ່ມເປັນກ້ອນ, ຕຸ້ມໂຫ່ກັນ, ມີຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນແລະກັນ ຈຶ່ງພາກັນເອີ້ນຕາມພາສາພື້ນບ້ານວ່າ " ຂັບຕຸ້ມ"; ທັດສະນະທີສາມແມ່ນການເອີ້ນຊື່ບົ່ງບອກເຖິງເວລາ ແລະ ບອກສຽງທຸ້ມ, ສຽງສະທ້ອນ, ສຽງກ້ອງກັງວານເປັນຄື້ນໆ ແລະ ທັດສະນະທີສີ່ຂັບທຸ້ມກຳເນີດມາຈາກການອ່ານໜັງສື, ອ່ານກາບກອນຈົນກາຍມາເປັນຂະບວນວິວັດທະນາການຂັບທຸ້ມທີ່ບ່າວ-ສາວ ໃຊ້ຂັບໂຕ້ຕອບກັນ, ເວົ້າຢອກລໍ້ ຕໍ່ແຍກັນ ເລີ່ມມີມາໃນສະຕະວັດທີ 14 ລັດຊະການ ຂອງເຈົ້າຟ້າງຸ່ມມະຫາລາດ ປີ ຄສ 1357 ເປັນຕົ້ນມາ. ໃນນັ້ນການ ຂັບທຸ້ມຫຼວງພະບາງ ມີທັງໝົດ 8 ບົດຂັບເຊິ່ງເນື້ອໃນຫຼັກແມ່ນເວົ້າເຖິງຄວາມຮັກບ່າວ-ສາວ ທີ່ຕິດພັນກັບວິຖີຊີວິດ, ສັດສາວາສິ່ງ ແລະ ທຳມະຊາດ ເປັນຕົ້ນ.

ສິລະປະການປະດິດແຕ່ງປະເພດຂັບ ພົບການປະດິດແຕ່ງປະເພດຂັບຫຼວງພະບາງ ສ່ວນຫຼາຍເພິ່ນຈະແຕ່ງມີຢູ່ 9 ວັກ. ແຕ່ລະວັກຈະມີຄວາມໝາຍ ຄື ວັກທີ 1, 2 ຜູ້ແຕ່ງຈະໃຊ້ຄຳທັກທາຍ ໂດຍໃຊ້ວິທີການປຽບທຽບເອົາຮູບພາບ,ອາດຊິງຜູ້ທີ່ຈະຂັບຕອບວ່າ ແກ້ມຄໍ່າທໍ່າ, ແກ້ມເປັນເອີ່ນ, ແກ້ມປາວ່າ... ເມື່ອຜູ້ຕອບໄດ້ຟັງ, ໄດ້ຍິນແລ້ວມີຄວາມດີໃຈ, ເບີກບານມ່ວນຊື່ນຕໍ່ຜູ້ທີ່ຂັບມາໃສ່, ວັກທີ 3, 4, 5 ຈະສະແດງຄວາມຮັກມັກ ຢາກໃຫ້ມາຢູ່ເປັນຄູ່, ມາຄຽງຂ້າງ ເຊີນມາ ຫຼິ້ນ, ເຊີນມາກິນນຳ ບໍ່ດີບໍ່ຮູ້ແຕ່ຢ່າງໃດ ເມື່ອເວົ້າໄປແລ້ວ ເປັນການອອດອ້ອນໃສ່ຄຳຫວານໃຊ້ຄາລົມ, ໃຊ້ຄຳອ່ອນນ້ອມ ວ່າໂຕເອງເປັນຄົນຈົນ, ຂີ້ລ້າຍບໍ່ສົມເຈົ້າຜູ້ດີ, ຜູ້ງາມ, ຜູ້ຮັ່ງມີ ຫຼື ເປັນລູກເຈົ້າລູກນາຍ, ເປັນນາງຫົງ, ເປັນນາງຟ້າປ່າເປີດ ຢ່າຊັງ. ວັກທີ 6 ຜູ້ຂັບ ໃຊ້ຄຳເວົ້າ ໃຫ້ຜູ້ອື່ນສົງສານເຫັນໃຈ ວ່າຕົນເອງບໍ່ມີຫຍັງ. ເມື່ອກ່ອນ ໃນວັກທີ 6 ນີ້ ຈະໃຊ້ເປັນຄຳຖາມແບບວ່າ ເຈົ້າມີຊູ້ແລ້ວບໍ, ມີແຟນແລ້ວບໍ ແລະ ອື່ນໆ ... ວັກທີ 7, 8 ແມ່ນທ່ອນແຍກຂອງກອນທີ່ໃກ້ຈະ ຈົບລົງ ທັງເປັນວັກທີ່ໂດດເດັ່ນ ໃຊ້ພຶດຜົນມາປຽບທຽບໃສ່ທາດແທ້ໃນການກະທຳ ໃຊ້ຄຳວ່າ ໂອ້ເຈົ້າດອກ ດອກເອີ່ຍ ເຈົ້າດອກໆເອີ່ຍ ໂອເຈົ້າດອກໝາກ...ເປັນການສົມທຽບໃສ່ທຳມະຊາດເຊັ່ນ: ດອກຈຳປີ,

ດອກໝາກເຜັດ ແລະ ອື່ນໆ... ຈະມີສີສັນລົດຫວານ ຫຼື ມີລົດ ເຜັດ, ມີ ຢັ້ງ, ມີແມງກັດແລ້ວບໍ? ແນວນັ້ນ ແນວນີ້ ເຫຼືອແຕ່ດໍ ຫຼື ເຫຼືອແຕ່ກ້ານ ແຕ່ກິ່ງໄວ້ ໃຫ້ ລວມຄວາມແລ້ວ ຢູ່ໃນວັກ ນີ້ຜູ້ແຕ່ງ ຈະໃຊ້ຄຳທັງຍ້ອງຍໍ ແລະ ຕຳນິລົງໄປ. ວັກທີ 9 ວັກລົງທ້າຍ ດ້ວຍຄຳທີ່ວ່າ ເຣີຍ ເຣີຍເຈົ້າແກ້ມໆ... ວັກນີ້ໃຊ້ວິທີສະແດງ ສອງ ລີລາ, ລີລາໜຶ່ງ ແບບຢອກໄຍ ຫຼື ເອີ້ນວ່າເວົ້າຫຼິ້ນແກມແທ້ກໍມີ.

2) ການຟ້ອນ: ປະກອບມີ ການຟ້ອນນາງແກ້ວ ແລະ ຟ້ອນພະລັກພະລາມ; ການຟ້ອນມີປະຫວັດຄວາມເປັນມາດັ່ງນີ້:

ຟ້ອນນາງແກ້ວ ຜົນການສຶກສາພົບວ່າ ບົດຟ້ອນນາງແກ້ວກໍມີມາແຕ່ເມື່ອກ່ອນພຸ້ນໃນ ສະຕະວັດທີ 14 ເຈົ້າຟ້າງຸ່ມ ໄດ້ນຳເອົາສາສະ ໜາພຸດເຂົ້າມາທີ່ຊຽງດົງ-ຊຽງທອງ ຫຼວງພະບາງ ໃນປັດຈຸບັນຫຼັງຈາກສ້າງວັດ ວາອາຮາມສຳເລັດເສັດສິ້ນແລ້ວ ກໍໄດ້ຟ້ອນນາງແກ້ວຖວາຍເຈົ້າຟ້າງຸ່ມ ແລະ ມະເຫສີນາງແກ້ວເກງຍາ. ນອກຈາກນີ້ ຍັງພົບວ່າ ລັກສະນະຂອງການຟ້ອນນາງແກ້ວ ປະກອບດ້ວຍ 17 ທ່າ. ປັດຈຸບັນບົດຟ້ອນນາງແກ້ວໄດ້ ຂະຫຍາຍຕົວອອກ ຢ່າງກວ້າງຂວາງໃນງານມະຫະກຳຕ່າງໆ ທີ່ຈັດຂຶ້ນຢູ່ແຂວງຫຼວງພະບາງ ແມ່ນໄດ້ປະກອບມີບົດຟ້ອນນາງແກ້ວທຸກໆຄັ້ງ ແລະ ໄດ້ຮັບໃຊ້ແຂກພາຍໃນ, ແຂກຕ່າງປະເທດແຂກທີ່ສຳຄັນຂອງແຂວງອົງການກະຊວງຕ່າງໆ ກໍປະກອບມີບົດຟ້ອນນາງແກ້ວທຸກໆເທື່ອ ທີ່ສະແດງຮັບໃຊ້ເພິ່ນ ແລະ ເປັນທີ່ໜ້າສົນໃຈຂອງແຂກທັງໄດ້ສຸມສະຕິປັນຍາທຸ້ມເທເຫື່ອແຮງ. ພ້ອມກັນນີ້ ການຟ້ອນນາງແກ້ວ ຍັງມີຄວາມເຊື່ອວ່າ ຄົນທີ່ຈະມາຮັບບົດເປັນນັກສະແດງ ຫຼື ຜູ້ຟ້ອນນັ້ນຈະຕ້ອງເປັນ ແມ່ຍິງທີ່ບໍລິສຸດ ແລະ ບໍ່ເຄີຍຜ່ານມືຊາຍ ຫຼື ການສ້າງຄອບຄົວມາກ່ອນ ເພາະເຊື່ອວ່າ ເປັນການຟ້ອນຖວາຍເບື້ອງສູງ. ສະນັ້ນ, ຜູ້ສະແດງຈະຕ້ອງມີຈິດໃຈ ແລະ ຮ່າງກາຍທີ່ບໍລິສຸດ.

ການຟ້ອນພະລັກພະລາມ: ຂໍ້ມູນຈາກການສຳພາດພົບວ່າ ການຟ້ອນພະລັກພະລາມປະກອບມີຫຼາຍໄມ້ ແຕ່ລະທ່າຟ້ອນແມ່ນເກີດມາຈາກທ່າມວຍລາຍລາວ ທີ່ໄດ້ນຳເອົາມາຈາກເລື່ອງໃນວັນນະຄະດີຂອງປະເທດຂະເໝນ ແຕ່ທ່າຟ້ອນເຫັນວ່າ ມີຄວາມແຂງແຮງ. ນອກຈາກນີ້ ຍັງພົບວ່າ ການຟ້ອນພະລັກພະລາມແມ່ນຮັບເອົາການຟ້ອນໂຂນ ຫຼື ພະລັກພະລາມ ຈາກຂະເໝນເຂົ້າສູ່ດິນແດນລາວລ້ານຊ້າງບໍ່ໄດ້ໝາຍຄວາມວ່າ ລາວເຮົາຈະເອົາຕາມແບບຢ່າງຂອງຂະເໝນທັງໝົດ, ສິລະປະກອນຜູ້ມີຫົວຄິດປະດິດສ້າງໃນລາຊະສຳນັກລ້ານຊ້າງ ໄດ້ປັບປ່ຽນລາຍລະອຽດເກືອບທັງໝົດ ສະແດງອອກເນື້ອເລື່ອງຂອງພະລັກພະລາມ (ຕົ້ນສະບັບຈາກອິນເດຍ) ໄດ້ຖືກປັບປ່ຽນໃຫ້ສອດຄ່ອງກັບສະພາບການ ແລະ ສະຖານທີ່-ພູມສັນຖານໃນດິນແດນລ້ານຊ້າງ ແລະ ອາດຟ້ອນກໍຖືກພັດທະນາຄືນໃໝ່ ຈາກແບບຂອງຂະເໝນ ທີ່ກາງຂາກວ້າງ-ວົງແຂນແຄບມາເປັນແບບສະບັບຂອງລາວ ທີ່ມີການໂຍກບ່າໄຫຼ່ ວົງແຂນສະເໜີ-ກາງຂາແຄບ ແລະ ຊຸ້ມເຂົ່າສູງ. ນອກຈາກນີ້, ດ້ານດົນຕີນັ້ນ, ນອກຈາກເພງກາວນອກ, ກາວໃນ, ກາວກາງທີ່ໃຊ້ສຳລັບສາກຕ່າງໆແລ້ວ, ຍັງໄດ້ໃຊ້ ເພງມະໂຫລີຫຼວງໃນລາຊະສຳນັກລາວ (ເພງລາວເດີມ) ປະກອບເຂົ້ານຳເປັນສ່ວນຫຼາຍ ເພງລາວເດີມແມ່ນ ໝວດເພງ ທີ່ມີຄຳວ່າ "ລາວ" ນຳໜ້າ.

3) ການສະແດງລະຄອນ: ການສະແດງລະຄອນທີ່ເປັນເອກະລັກສະເພາະຂອງແຂວງຫຼວງພະບາງ ແມ່ນລະຄອນອີ່ປ໊ອກ: ຂໍ້ມູນຈາກການສຳພາດພົບວ່າ: ຫຸ່ນລະຄອນອີ່ປ໊ອກ ແມ່ນໄດ້ນຳໃຊ້ຫຸ່ນໄມ້ທີ່ແກະສະຫຼັກ ແລະ ປະດິດເປັນຮູບຄົນ, ຮູບສັດປະເພດຕ່າງໆທີ່ປະດັບປະດາດ້ວຍເສື້ອຜ້າ ແລະ ຕົບແຕ່ງໃຫ້ສວຍງາມ ເພື່ອເປັນຕົວລະຄອນສະແດງໃນເວທີຕາມບົດເລື່ອງ ຫຼື ນິທານ ພື້ນເມືອງຂອງລາວ ເພື່ອໃຫ້ຜູ້ໄດ້ຮັບຊົມມີຄວາມເບີກບານມ່ວນຊື່ນສະໜຸກສະໜານ, ນອກຈາກນີ້ ຍັງພົບວ່າ ລະຄອນອີປ໋ອກກຳເນີດຂຶ້ນມາໄດ້ຫຼາຍເຊັ່ນຄົນແລ້ວເຊິ່ງເລີ່ມຕົ້ນແຕ່ສະໄໝເຈົ້າຟ້າງຸ່ມມະຫາລາດທີ່ນຳເອົາພະບາງມາຈາກຂະເໝນ ແລະ ຕໍ່ມາກຸ່ມຄົນໜຶ່ງຂອງຊາວບ້ານຊຽງທອງໄດ້ເອົາລະຄອນປະເພດນີ້ແມ່ນຖອດມາຈາກລະຄອນໂຂນຈີນມາເຖິງສະໄໝເຈົ້າອຸ່ນຄຳ, ເຈົ້າສັກກະລິນ ລະຄອນອີ່ປ໊ອກກໍຍັງສືບຕໍ່ການເຄື່ອນໄຫວ ແຕ່ຕໍ່ມາຍ້ອນສະພາບຄວາມ ຫຍຸ້ງຍາກເພາະສົງຄາມ ແລະ ນັກສະແດງກໍກະແຈກກະຈາຍການສະແດງ ຈຶ່ງຢຸດໄປຊົ່ວຄາວຈົນມາຮອດສະໄໝເຈົ້າ ສີສະຫວ່າງວົງລຸງດີເສນ ແລະ ສິລະປະການສະແດງລະຄອນອີປ໊ອກ ຍັງຄົງຮັກສາມາເຖິງປັດຈຸບັນ.

*4.2 ຂະບວນການປ່ຽນແປງຂອງສິລະປະການສະແດງພື້ນເມືອງທີ່ເປັນເອກະລັກຂອງແຂວງຫຼວງພະບາງ*

"ການຂັບຫຼວງພະບາງມີຂະບວນການປ່ຽນແປງ ຫຼາຍຈາກເມື່ອກ່ອນແມ່ນຂັບສະເພາະຢູ່ໃນບ້ານ ຫຼື ຂົງເຂດໃດໜຶ່ງ ເພື່ອຮັບໃຊ້ໃນຮີດຄອງປະເພນີ, ສະນັ້ນ, ສັບສຳນວນທີ່ໃຊ້ໃນການຂັບມີລັກສະນະວົງແຄບ, ແຕ່ມາເຖິງປັດຈຸບັນນີ້ສັບສຳນວນການພັນລະນາມີລັກສະນະປະສົມ ປະສານກັນ, ມີທັງສຳນວນແບບເກົ່າ ແລະ ແບບໃໝ່ເກີດຂຶ້ນ ເຊັ່ນ: ສຳນວນຮັບຂັບໃຊ້ກອງປະຊຸມການນຳຂອງພັກ, ກິລາແຫ່ງຊາດ, ວັດທະນະທຳ, ສັງຄົມຈະມີສຳນວນໃໝ່ເກີດຂຶ້ນຫຼາຍ. ອີກປະການໜຶ່ງໄດ້ເກີດມີການຈັດຕັ້ງກຸ່ມຂັບຂຶ້ນ ໂດຍການລວມຕົວກັນສຳລັບຜູ້ທີ່ມີຄວາມຊຳນານການຂັບເຕົ້າໂຮມກັນແລ້ວ ຖືກຈ້າງໄປຂັບແຕ່ລະບ່ອນທີ່ມີບຸນ ປະເພນີ, ງານຂຶ້ນເຮືອນໃໝ່, ງານບຸນເຮືອນດີ, ບຸນບ້ານເປັນຕົ້ນ".

ການຟ້ອນນາງແກ້ວທີ່ໄປຟ້ອນໃນງານສະແດງມີການຕັດທ່າຟ້ອນອອກ. ເນື່ອງຈາກວ່າ ທ່າຟ້ອນເກົ່າມັນຍາວ ເກີນໄປເຮັດໃຫ້ແຂກທີ່ມາເບິ່ງຊົມເຂົາເຈົ້າມີການຈຳກັດເວລາ. ສະນັ້ນບັນດານັກຟ້ອນຈຶ່ງມີຄວາມຈຳເປັນດັດປັບທ່າ ຟ້ອນລົງຈາກເດີມ

17 ທ່າ ຍັງເຫຼືອແຕ່ 8 ທ່າ ເທົ່ານັ້ນ. ທ່າຟ້ອນພະລັກພະລາມ ຫຼື ຟ້ອນໂຂນພົບວ່າ ເມື່ອກ່ອນນັ້ນມີ 10 ໄມ້ (ທ່າຟ້ອນ) ແຕ່ມາເຖິງປັດຈຸບັນນີ້ ການ ຟ້ອນນາງແກ້ວທີ່ໄປຟ້ອນໃນງານສະແດງມີການຕັດທ່າຟ້ອນອອກ ເນື່ອງຈາກທ່າຟ້ອນເກົ່າມັນຍາວເກີນໄປເຮັດໃຫ້ແຂກ ທີ່ມາເບິ່ງມາຊົມ ເຂົາເຈົ້າມີການຈຳກັດເວລາ. ສະນັ້ນ, ບັນດານັກຟ້ອນຈຶ່ງມີຄວາມຈຳເປັນດັດປັບທ່າຟ້ອນລົງຈາກເດີມ 10 ໄມ້ ຍັງເຫຼືອແຕ່ 3 ໄມ້ ເທົ່ານັ້ນ. ການສະແດງລະຄອນອີ່ປ້ອກພົບວ່າ ປັດຈຸບັນເນື້ອໃນການສະແດງແມ່ນ ການໂຄສະນາກ່ຽວກັບສຸຂະສຶກສາ, ເສີມຂະຫຍາຍສິດທິເດັກ, ການຮັກສາສິ່ງແວດລ້ອມ, ຕ້ານສິ່ງເສບຕິດ, ຮີດຄອງປະເພນີທາງດ້ານວັດທະນະທຳ ແລະ ອື່ນໆເຊິ່ງຖ້າຈະທຽບກັບການສະແດງອື່ນແລ້ວເຫັນວ່າ ການສະແດງອີ່ປ້ອກແມ່ນງ່າຍກວ່າໃຊ້ຄົນເພາະມັນທັງປະຢັດ, ງ່າຍດາຍ, ກະທັດຮັດ, ເບົາບາງ ແຕ່ກໍສາມາດສ້າງປະໂຫຍດໄດ້ຫຼາຍເຊິ່ງບໍ່ຕ່າງຫຍັງກັບຄົນເຮົາ. ສິລະປະການສະແດງພື້ນເມືອງທີ່ເປັນເອກະລັກ ຂອງຊາວຫຼວງພະບາງທີ່ຄາດວ່າຈະສູນຫາຍ ຜົນການວິເຄາະພົບວ່າ ປະເພດການຂັບ, ການສະແດງການຟ້ອນພື້ນເມືອງ ແລະ ປະເພດລະຄອນ ທີ່ຄາດວ່າຈະສູນຫາຍຖ້າຊຸມຊົນບໍ່ມີມາດຕະການໃນການສົ່ງເສີມ ປະກອບມີ ຂັບທຸ້ມ, ຂັບສະຫຼາງ ສາມສ້າວ, ຂັບນາກສະດຸ້ງ, ສອງຄອນລອດໄດ້, ຂັບງ້ອມ. ສ່ວນການສະແດງການຟ້ອນພື້ນເມືອງແບບດັ້ງເດີມໂດຍ ສະເພາະແມ່ນການຟ້ອນນາງແກ້ວ 17 ທຳ ແຕ່ປັດຈຸບັນນີ້ນັກສະແດງສ່ວນຫຼາຍໄດ້ສະແດງ ມີພຽງແຕ່ 8 ທຳເທົ່ານັ້ນ ແລະ ການຟ້ອນພະລັກພະລາມກໍເຊັ່ນດຽວກັນ ເມື່ອກ່ອນມີການຟ້ອນ 9 ໄມ້ ແຕ່ມາຮອດປັດຈຸບັນມີການດັດປັບທ່າຟ້ອນລົງຍັງ ເຫຼືອພຽງແຕ່ 3 ໄມ້ເທົ່ານັ້ນ. ພ້ອມດຽວກັນນັ້ນ ປະເພດລະຄອນອີປ້ອກກໍມີຄວາມສ່ຽງທີ່ຈະສູນຫາຍເຊັ່ນດຽວກັນ ຄົນຮຸ່ນໃໝ່ບໍ່ຄ່ອຍສົນໃຈທີ່ຈະຮຽນສະແດງ ເຮັດໃຫ້ນັກສະແດງຮຸ່ນສືບທອດມີຈຳນວນຫຼຸດລົງຫຼາຍຖ້າທຽບໃສ່ເມື່ອກ່ອນ.

*4.3 ບັນຫາ ແລະ ແນວທາງການປົກປັກຮັກສາ ແລະ ສົ່ງເສີມສິລະປະການສະແດງພື້ນເມືອງຂອງແຂວງຫຼວງພະບາງ*

ເຫດຜົນທີ່ຄວນປົກປັກຮັກສາ ແລະ ສົ່ງເສີມສິລະປະການສະແດງພື້ນເມືອງແຂວງຫຼວງພະບາງ ຜົນການວິເຄາະພົບວ່າ ສິລະປະການສະແດງພື້ນເມືອງ ເປັນສິລະປະການສະແດງຂອງບັນພະບຸລຸດເຮົາສືບທອດມາ, ເປັນມໍລະດົກຂອງທ້ອງຖິ່ນ, ເປັນການສະແດງທີ່ເກົ່າແກ່, ເປັນການສະແດງທີ່ ຫາເບິ່ງຫາຊົມໄດ້ຍາກ ເປັນການສະແດງມີມາແຕ່ດຶກດຳບັນ, ເປັນການສະແດງປະຈຳທ້ອງຖິ່ນ ແລະ ເປັນພູມປັນຍາຂອງ ບັນພະບຸລຸດ, ພ້ອມນັ້ນ , ອີກເຫດຜົນໜຶ່ງ ພວກເຮົາປົກປັກຮັກສາ ແລະ ສົ່ງເສີມສິລະປະການສະແດງພື້ນເມືອງ ຍ້ອນວ່າສິລະປະການສະແດງພື້ນເມືອງເປັນຂອງອະນຸລັກຮັກສາຂອງບ້ານເຮົາ, ເປັນເອກະລັກຂອງທ້ອງຖິ່ນ, ເປັນການສະແດງທີ່ມີພຽງໜຶ່ງດຽວໃນແຂວງຫຼວງພະບາງເປັນເອກະລັກສະເພາະຂອງບ້ານເຮົາ, ເປັນມໍລະດົກຂອງພວກເຮົາ ແລະ ເປັນເອກະລັກປະຈຳຊາດລາວ. ສິ່ງດຶງດູດໃຈ ທີ່ພາໃຫ້ເບິ່ງຊົມສິລະປະການ ສະແດງພື້ນເມືອງຂອງແຂວງຫຼວງພະບາງ ຜົນການວິເຄາະພົບວ່າ ສິລະປະການສະແດງພື້ນເມືອງແຂວງຫຼວງພະບາງທີ່ມີ ຄວາມອ່ອນຊ້ອຍ, ມີເອກະລັກສະເພາະທີ່ໂດດເດັ່ນ, ມີຄຸນນະພາບເຊິ່ງສະແດງອອກຜ່ານຈິດໃຈຂອງຜູ້ສະແດງ ແມ່ນການສະແດງເລື່ອງເລົ່າທີ່ມີຄວາມໝາຍເພື່ອໃຫ້ສັງຄົມໄດ້ຮັບຮູ້ເຖິງຄຸນງາມຄວາມດີຂອງບັນພະບຸລຸດລາວທີ່ມີການ ສົ່ງເສີມສິລະປະວັນນະຄະດີຂອງລາວໃຫ້ມີຄວາມສີວິໄລ ໂດຍປະສົມປະສານ ແລະ ນຳມາຈາກຕ່າງປະເທດກໍຕາມ ແຕ່ ໄດ້ມີການດັດປັບໃຫ້ເປັນເອກະລັກສະເພາະຂອງຄົນລາວແທ້ໆ ເພື່ອໃຫ້ຄົນລາວເຮົາໄດ້ສືບສານໃຫ້ຮຸ່ນລູກຫຼານໄດ້ຕໍ່ ຍອດຄວາມຈະເລີນຮຸ່ງເຮືອງທາງດ້ານອະລິຍະທຳທີ່ຫຼາກຫຼາຍ ທາງດ້ານວັດທະນະທຳການສະແດງແມ່ນສິ່ງດຶງດູດໃຈທີ່ ພາໃຫ້ຄົນຮຸ່ນໃໝ່ບໍ່ວ່າຈະເປັນຊາວລາວ ແລະ ຊາວຕ່າງຊາດ ຫຼາຍຄົນມີຄວາມສົນໃຈຢາກເບິ່ງຢາກຊົມ. ບັນຫາໃນການປົກປັກຮັກສາ ແລະ ສົ່ງເສີມສິລະປະການສະແດງພື້ນເມືອງຂອງແຂວງຫຼວງພະບາງ ຜົນການວິເຄາະພົບວ່າ ມີບັນຫາຫຼາຍຢ່າງເປັນຕົ້ນແມ່ນ ບັນຫາຜູ້ທີ່ມີ ຄວາມຊຳນິຊຳນານນັບມື້ນັບຫຼຸດລົງ, ບັນຫາການໂຄສະນາເຜີຍແຜ່ມີນ້ອຍ, ບັນຫາຂາດທຶນຮອນໃນການຊຸກຍູ້, ບັນຫາ ສະພາບແວດລ້ອມປັດຈຸບັນຄົນຮຸ່ນໃໝ່ບໍ່ຄ່ອຍໃຫ້ຄວາມສົນໃຈ, ບັນຫາຄົນຮຸ່ນສືບທອດສິລະປະການລະແດງມີທ່າອ່ຽງຫຼຸດໜ້ອຍລົງ, ບັນຫາຂາດຫຼັກສູດການຮຽນ-ການສອນສະເພາະ, ບັນຫາສະພາບເສດຖະກິດບໍ່ອຳນວຍຄວາມສະດວກໃຫ້ນັກສະແດງດຳລົງຢູ່ໄດ້ດ້ວຍອາຊີບນັກສະແດງ, ບັນຫາຂາດການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງຊຸກຍູ້ສົ່ງເສີມ. ການປະກອບອາຊີບສິລະປະການສະແດງ ພື້ນເມືອງຂອງແຂວງຫຼວງພະບາງ ຜົນການວິເຄາະພົບວ່າ ການຮັບໃຊ້ການສະແດງສິລະປະພື້ນເມືອງເປັນການຫາລາຍໄດ້ຂອງຄອບຄົວທີ່ສຳຄັນ, ເພາະວ່າສາມາດຊ່ວຍເສີມສ້າງໃຫ້ເສດຖະກິດຄອບຄົວດີຂຶ້ນ, ເຮັດໃຫ້ຊີວິດການເປັນຢູ່ດີຂຶ້ນ ເປັນເທື່ອລະກ້າວ, ມີລາຍໄດ້ລ້ຽງຄອບຄົວພໍມີຢູ່ມີກິນ, ເປັນອາຊີບທີ່ດີ ມີຄຸນຄ່າຕໍ່ຈິດໃຈເພາະວ່າເປັນວຽກທີ່ເຮັດໃຫ້ ສັງຄົມໄດ້ຮັບຮູ້ຄວາມສີວິໄລຂອງອະລິຍະທຳທາງດ້ານວັດທະນະທຳທ້ອງຖິ່ນ ແລະ ໄດ້ມີສ່ວນຮ່ວມໃນການປົກປັກ ຮັກສາ ແລະ ສົ່ງເສີມວັດທະນະທຳຂອງທ້ອງຖິ່ນກໍຄືຂອງຊາດລາວນຳອີກ.

## 5. ອະພິປາຍຜົນ

ການຄົ້ນຄວ້າຄັ້ງນີ້ມີຈຸດປະສົງເພື່ອຄົ້ນຫາປະເພດ, ປະຫວັດຄວາມເປັນມາ, ຂະບວນການປ່ຽນແປງ, ບັນຫາ ແລະ

ແນວທາງໃນການປົກປັກຮັກສາ ແລະ ສົ່ງເສີມສິລະປະການສະແດງພື້ນເມືອງທີ່ເປັນເອກະລັກຂອງແຂວງຫຼວງພະບາງ. ຜົນການຄົ້ນຄວ້າໄດ້ຊີ້ໃຫ້ເຫັນເຖິງຄວາມຮັ່ງມີ ແລະ ຫຼາກຫຼາຍຂອງສິລະປະການສະແດງດັ່ງກ່າວ, ເຊິ່ງປະກອບມີ ການຂັບ, ການຟ້ອນ ແລະ ການສະແດງລະຄອນ. ຜົນການຄົ້ນຄວ້າ ສອດຄ່ອງກັບແນວຄິດທີ່ວ່າ ວັດທະນະທຳລາວເປັນເອກະລັກແຫ່ງຊາດ ແລະ ເປັນມໍລະດົກອັນລ້ຳຄ່າທີ່ຄວນຮັກສາ, ພັດທະນາ ແລະ ສົ່ງເສີມ ດັ່ງທີ່ໄດ້ກ່າວໄວ້ໃນກົດໝາຍ ວ່າດ້ວຍສິລະປະການສະແດງ ແລະ ແຜນພັດທະນາວັດທະນະທຳ-ສັງຄົມແຫ່ງຊາດ.

*5.1 ການອະພິປາຍກ່ຽວກັບປະເພດ ແລະ ປະຫວັດຄວາມເປັນມາຂອງສິລະປະການສະແດງ*

1) ການຂັບ: ຜົນການຄົ້ນຄວ້າໄດ້ຢືນຢັນວ່າ ການຂັບແມ່ນສິລະປະການສະແດງພື້ນເມືອງທີ່ມີຄວາມຫຼາກຫຼາຍໃນຫຼວງພະບາງ, ໂດຍ

ສະເພາະແມ່ນ "ຂັບທຸ້ມ" ທີ່ມີຄວາມໂດດເດັ່ນ ແລະ ມີ 8 ບົດຂັບຫຼັກທີ່ເນັ້ນເນື້ອໃນຄວາມຮັກບ່າວ-ສາວທີ່ຕິດພັນກັບວິຖີຊີວິດ ແລະ ທຳມະຊາດ. ທັດສະນະກ່ຽວກັບຕົ້ນກຳເນີດຂອງການຂັບທຸ້ມທີ່ມາຈາກສຽງໄມ້ໄຜ່ສຽດສີກັນ, ການຢູ່ຮ່ວມກັນເປັນກຸ່ມ “ຂັບຕຸ້ມ” ຫຼື ພັດທະນາມາຈາກການອ່ານໜັງສືກາບກອນໃນສະຕະວັດທີ 14 ສະແດງໃຫ້ເຫັນເຖິງປະຫວັດສາດທີ່ຍາວນານ ແລະ ການເຊື່ອມໂຍງກັບວິຖີຊີວິດຂອງປະຊາຊົນ.

ການຄົ້ນພົບກ່ຽວກັບໂຄງສ້າງການປະດິດແຕ່ງຂອງການຂັບ, ໂດຍສະເພາະ 9 ວັກທີ່ແຕ່ລະວັກມີຄວາມໝາຍສະເພາະ (ເຊັ່ນ: ການທັກທາຍ, ສະແດງຄວາມຮັກ, ອອດອ້ອນ, ປຽບທຽບ

ທຳມະຊາດ ແລະ ຄຳລົງທ້າຍ), ເປັນຂໍ້ມູນໃໝ່ທີ່ເສີມສ້າງຄວາມເຂົ້າໃຈກ່ຽວກັບສິລະປະການປະດິດແຕ່ງຂອງລາວ. ຜົນການຄົ້ນຄວ້າສອດຄ່ອງກັບການສຶກສາຂອງ ແກ້ວ ໄຊຍະວົງ (2016) ທີ່ໄດ້ສຶກສາເນື້ອໃນຂອງຂັບສະຫຼາງ-ສາມສ້າວ ແລະ ພົບວ່າເນື້ອໃນໄດ້ສະແດງເຖິງຄວາມຮັກລະຫວ່າງບ່າວ-ສາວ ແລະ ການໃຊ້ຄຳເວົ້າທີ່ສຽດສີຢອກໄຍ. ນອກຈາກນີ້, ການສຶກສາຂອງ ໝອນ ຄູດທະວົງ (2017) ກ່ຽວກັບສິລະປະການປະດິດແຕ່ງໃນປຶ້ມບົດ "ອ່ານໜັງສືຫຼວງພະບາງ" ກໍຍັງພົບການນຳໃຊ້ການສຳຜັດແບບປະສົມປະສານ ແລະ ເນື້ອໃນທີ່ສະທ້ອນເຖິງຄວາມຮັກ ແລະ ການພົວພັນສັງຄົມ ເຊິ່ງສະໜັບສະໜູນວ່າ ການຂັບແມ່ນຮູບແບບວັນນະຄະດີທີ່ມີຄວາມສຳຄັນ ແລະ ມີລັກສະນະສະເພາະຕົວ.

2) ການຟ້ອນ: ການຄົ້ນຄວ້າພົບວ່າ ການຟ້ອນທີ່ເປັນເອກະລັກຂອງຫຼວງພະບາງປະກອບມີ "ຟ້ອນນາງແກ້ວ" ແລະ "ຟ້ອນພະລັກພະລາມ".

ຟ້ອນນາງແກ້ວ: ຜົນການຄົ້ນຄວ້າຢືນຢັນວ່າ ຟ້ອນນາງແກ້ວມີມາແຕ່ສະຕະວັດທີ 14, ກ່ຽວຂ້ອງກັບການນຳເອົາສາສະໜາພຸດເຂົ້າມາຫຼວງພະບາງ ແລະມີ 17 ທ່າຟ້ອນ. ສິ່ງທີ່ໜ້າສົນໃຈຄືຄວາມເຊື່ອທີ່ວ່າ ຜູ້ຟ້ອນຕ້ອງເປັນແມ່ຍິງບໍລິສຸດ ເພື່ອຖະຫວາຍແກ່ເບື້ອງສູງ. ຂໍ້ມູນນີ້ເສີມສ້າງຄວາມເຂົ້າໃຈກ່ຽວກັບຄຸນຄ່າທາງສາສະໜາ ແລະ ຈິດວິນຍານຂອງສິລະປະການສະແດງນີ້. ຜົນການສຶກສານີ້ສອດຄ່ອງກັບ ປານີ ນໍລິນ (2017) ທີ່ໄດ້ສຶກສາຄຳຮຽກຊື່ທ່າຟ້ອນນາງແກ້ວ ແລະ ຈຳແນກລັກສະນະຂອງຄຳຮຽກຊື່ຕ່າງໆ ເຊິ່ງຊີ້ໃຫ້ເຫັນເຖິງລາຍລະອຽດຂອງທ່າຟ້ອນທີ່ຖືກຖ່າຍທອດມາ.

ຟ້ອນພະລັກພະລາມ: ຄົ້ນພົບວ່າ ຟ້ອນພະລັກພະລາມມີຕົ້ນກຳເນີດມາຈາກທ່າມວຍລາຍລາວ ແລະ ມີການດັດແປງຈາກໂຂນຂອງຂະເໝນ ໃຫ້ມີລັກສະນະແບບລາວ (ເຊັ່ນ: ການໂຍກບ່າໄຫຼ່, ວົງແຂນສະເໜີ, ກາງຂາແຄບ, ຊັນເຂົ່າສູງ) ແມ່ນສະແດງໃຫ້ເຫັນເຖິງວິວັດທະນາການ ແລະ ການສ້າງສັນຂອງສິລະປິນລາວໃນການຮັບເອົາ ແລະ ປັບປ່ຽນສິລະປະຈາກຕ່າງປະເທດໃຫ້ເຂົ້າກັບເອກະລັກຂອງຕົນເອງ. ຜົນນີ້ແຕກຕ່າງຈາກການສຶກສາຂອງ ອຸສະນີ ເພີ່ມດີ (2015) ກ່ຽວກັບຫຸ່ນລະຄອນນ້ອຍໂຈຫຼຸຍທີ່ເນັ້ນການສ້າງສັນຮູບແບບໃໝ່ເພື່ອຂະຫຍາຍຖານຜູ້ຊົມ, ແຕ່ກໍຍັງສະແດງໃຫ້ເຫັນເຖິງການປັບຕົວຂອງສິລະປະເພື່ອໃຫ້ຢູ່ລອດໃນຍຸກສະໄໝ.

**3) ການສະແດງລະຄອນ:** ເຖິງວ່າຜົນການຄົ້ນຄວ້າເບື້ອງຕົ້ນຍັງບໍ່ໄດ້ໃຫ້ລາຍລະອຽດຫຼາຍກ່ຽວກັບປະຫວັດຄວາມເປັນມາຂອງການສະແດງລະຄອນພື້ນເມືອງໃນຫຼວງພະບາງ, ແຕ່ການກ່າວເຖິງ "ລະຄອນອີ່ປ໊ອກ" ໃນພາກສະເໜີ (ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກົມສິລະປະການສະແດງ, 2021) ໄດ້ຊີ້ໃຫ້ເຫັນວ່າ ມັນເປັນອີກຮູບແບບໜຶ່ງທີ່ສຳຄັນ ແລະ ມີມາຕັ້ງແຕ່ດົນນານ. ການສຶກສາຂອງ ອຸສະນີ ເພີ່ມດີ (2015) ກ່ຽວກັບຫຸ່ນລະຄອນນ້ອຍໂຈຫຼຸຍກໍສະແດງໃຫ້ເຫັນວ່າການສະແດງລະຄອນມີພັດທະນາການທີ່ຜ່ານຍຸກຕ່າງໆ ແລະ ມີແນວທາງໃນການອະນຸລັກທັງແບບດັ້ງເດີມ ແລະ ສ້າງສັນຮູບແບບໃໝ່ ເຊິ່ງອາດເປັນແນວທາງສຳລັບການສຶກສາລະຄອນພື້ນເມືອງອື່ນໆໃນຫຼວງພະບາງຕໍ່ໄປ.

ຜົນການຄົ້ນຄວ້າໃນຄັ້ງນີ້ໄດ້ສະໜອງຂໍ້ມູນພື້ນຖານທີ່ສຳຄັນກ່ຽວກັບປະເພດ ແລະ ປະຫວັດຄວາມເປັນມາຂອງສິລະປະການສະແດງພື້ນເມືອງໃນຫຼວງພະບາງ. ມັນສະແດງໃຫ້ເຫັນເຖິງຄວາມເລິກເຊິ່ງຂອງມໍລະດົກວັດທະນະທຳທີ່ເປັນເອກະລັກຂອງແຂວງ ເຊິ່ງເປັນສິ່ງຈຳເປັນຕໍ່ການສ້າງຄວາມເຂົ້າໃຈ ແລະ ວາງແຜນການປົກປັກຮັກສາ ແລະ ສົ່ງເສີມໃນອະນາຄົດ.

*5.2 ການອະພິປາຍກ່ຽວກັບຂະບວນການປ່ຽນແປງຂອງສິລະປະການສະແດງພື້ນເມືອງ*

ຜົນການຄົ້ນຄວ້າກ່ຽວກັບຂະບວນການປ່ຽນແປງຂອງສິລະປະການສະແດງພື້ນເມືອງທີ່ເປັນເອກະລັກຂອງແຂວງຫຼວງພະບາງຍັງບໍ່ທັນໄດ້ຖືກນຳສະເໜີຢ່າງຈະແຈ້ງໃນເອກະສານທີ່ໄດ້ສຶກສາມາ. ເຖິງຢ່າງໃດກໍຕາມ, ຈາກພາກສ່ວນ "ບົດຄົ້ນຄວ້າທີ່ກ່ຽວຂ້ອງ" ແລະ "ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ", ສາມາດອະພິປາຍເຖິງຂະບວນການປ່ຽນແປງທີ່ສິລະປະເຫຼົ່ານີ້ອາດຈະປະເຊີນໄດ້.

ບົດຄົ້ນຄວ້າຂອງ ສີຫວັດ ຈັນດາລາດ (2012) ທີ່ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ການອະນຸລັກຂັບທຸ້ມຫຼວງພະບາງ ພົບວ່າ "ປັດໄຈທາງດ້ານການພັດທະນາ" ເປັນປັດໄຈທີ່ສົ່ງຜົນຫຼາຍທີ່ສຸດ. ການພັດທະນາທີ່ນຳໄປສູ່ຄວາມທັນສະໄໝ, ການຮຽນແບບສິ່ງຕ່າງໆຜ່ານສື່ເຊັ່ນ: ໂທລະສັບສະມາດໂຟນ, ເຮັດໃຫ້ວັດທະນະທຳການຂັບທຸ້ມຫຼຸດໜ້ອຍຖອຍລົງ. ນີ້ສະແດງໃຫ້ເຫັນວ່າ ສິລະປະການສະແດງພື້ນເມືອງກຳລັງປະເຊີນກັບການປ່ຽນແປງທາງສັງຄົມ ແລະ ເຕັກໂນໂລຊີທີ່ສົ່ງຜົນກະທົບຕໍ່ການສືບທອດ ແລະ ຄວາມນິຍົມ. ການປ່ຽນແປງນີ້ແມ່ນສອດຄ່ອງກັບແນວຄິດທີ່ວ່າສັງຄົມ ແລະ ວັດທະນະທຳກໍມີການປ່ຽນແປງຢູ່ຕະຫຼອດເວລາໂດຍສະເພາະໃນຍຸກໂລກາພິວັດ.

ເຖິງຢ່າງໃດກໍຕາມ, ການປ່ຽນແປງກໍບໍ່ໄດ້ໝາຍເຖິງການສູນຫາຍສະເໝີໄປ. ການປັບຕົວ ແລະ ປະຍຸກໃຊ້ກໍເປັນສ່ວນໜຶ່ງຂອງຂະບວນການປ່ຽນແປງ. ຕົວຢ່າງ: ການຟ້ອນພະລັກພະລາມທີ່ມີການປັບປ່ຽນຈາກຮູບແບບເດີມຂອງຂະເໝນໃຫ້ເປັນລັກສະນະຂອງລາວ ແມ່ນສະແດງໃຫ້ເຫັນເຖິງການປ່ຽນແປງທີ່ເກີດຂຶ້ນໂດຍການສ້າງສັນ ແລະ ປັບຕົວໃຫ້ເຂົ້າກັບບໍລິບົດທ້ອງຖິ່ນ. ນີ້ຍັງສອດຄ່ອງກັບການສຶກສາຂອງ ອຸສະນີ ເພັ່ມດີ (2015) ທີ່ໄດ້ນຳສະເໜີ "ແນວທາງການອະນຸລັກດ້ວຍການສ້າງສັນຮູບແບບໃໝ່" ສຳລັບຫຸ່ນລະຄອນນ້ອຍໂຈຫຼຸຍ ເພື່ອໃຫ້ສອດຄ່ອງກັບການປ່ຽນແປງທາງສັງຄົມ ແລະ ຂະຫຍາຍຖານຜູ້ຊົມຮຸ່ນໃໝ່. ສະນັ້ນ, ຂະບວນການປ່ຽນແປງແມ່ນລວມເຖິງທັງສິ່ງທ້າທາຍ ແລະ ໂອກາດໃນການປັບຕົວເພື່ອການຢູ່ລອດ ແລະ ພັດທະນາ.

*5.3 ການອະພິປາຍກ່ຽວກັບບັນຫາ, ແນວທາງໃນການປົກປັກຮັກສາ ແລະ ສົ່ງເສີມສິລະປະການສະແດງພື້ນເມືອງ*

ການຄົ້ນພົບບັນຫາ ແລະ ແນວທາງໃນການປົກປັກຮັກສາ ແລະ ສົ່ງເສີມສິລະປະການສະແດງພື້ນເມືອງແມ່ນຈຸດປະສົງຫຼັກຂອງການຄົ້ນຄວ້າຄັ້ງນີ້. ຈາກຜົນການຄົ້ນຄວ້າຂອງ ສີຫວັດ ຈັນດາລາດ (2012), ໄດ້ຍົກໃຫ້ເຫັນບັນຫາສອງປະການຫຼັກຄື: 1) ຜົນກະທົບຈາກການພັດທະນາ ແລະ ເຕັກໂນໂລຊີ: ປັດໄຈທາງດ້ານການພັດທະນາ ແລະ ການນຳໃຊ້ສື່ສັງຄົມອອນລາຍ (ໂດຍສະເພາະໂທລະສັບສະມາດໂຟນ) ຢ່າງແຜ່ຫຼາຍໃນກຸ່ມໄວໜຸ່ມ ເຮັດໃຫ້ການອະນຸລັກວັດທະນະທຳພື້ນເມືອງຫຼຸດໜ້ອຍຖອຍລົງ. ໄວໜຸ່ມໃຊ້ເວລາສ່ວນໃຫຍ່ໄປກັບສື່ທັນສະໄໝ, ເຊິ່ງສົ່ງຜົນກະທົບຕໍ່ຄວາມສົນໃຈ ແລະ ການເຂົ້າເຖິງສິລະປະດັ້ງເດີມ. ນີ້ແມ່ນບັນຫາທົ່ວໄປໃນຫຼາຍສັງຄົມທີ່ກຳລັງພັດທະນາ ແລະ ເຊື່ອມໂຍງກັບໂລກພາຍນອກ. 2) ບັນຫາດ້ານເສດຖະກິດ: "ປັດໄຈພາຍໃນ" ດ້ານເສດຖະກິດ, ໂດຍສະເພາະລາຍຮັບ-ລາຍຈ່າຍ, ເປັນອີກບັນຫາໜຶ່ງທີ່ເຮັດໃຫ້ການອະນຸລັກວັດທະນະທຳຂັບທຸ້ມຫຼຸດລົງ. ຄ່າຈ້າງຂອງນັກສະແດງພື້ນເມືອງ, ນັກຂັບລຳ ແມ່ນຂ້ອນຂ້າງສູງ (ເຊັ່ນ: ແມ່ເຫຼັກ 400,000-500,000 ກີບຕໍ່ຄືນ), ເຊິ່ງເຮັດໃຫ້ປະຊາຊົນທີ່ມີລາຍໄດ້ໜ້ອຍບໍ່ສາມາດຈ້າງໄດ້. ນີ້ຊີ້ໃຫ້ເຫັນເຖິງຊ່ອງຫວ່າງລະຫວ່າງມູນຄ່າຂອງສິລະປະ ແລະ ຄວາມສາມາດໃນການສະໜັບສະໜູນທາງດ້ານເສດຖະກິດ ເຊິ່ງອາດສົ່ງຜົນກະທົບຕໍ່ການຢູ່ລອດຂອງນັກສິລະປິນ ແລະ ການສືບທອດຄວາມຮູ້.

ໃນດ້ານແນວທາງການປົກປັກຮັກສາ ແລະ ສົ່ງເສີມ, ຜົນການຄົ້ນຄວ້າຂອງ ສີຫວັດ ຈັນດາລາດ (2012) ໄດ້ເນັ້ນໜັກເຖິງ "ການປູກຈິດສຳນຶກ" ວ່າເປັນວິທີການທີ່ສຳຄັນທີ່ສຸດ. ການປູກຈິດສຳນຶກສ້າງໃຫ້ຄົນຮຸ່ນໃໝ່ຮູ້, ເຂົ້າໃຈ, ນຳໄປປະຕິບັດສືບທອດ ແລະ ຮູ້ຈັກຄຸນຄ່າຂອງວັດທະນະທຳຂັບທຸ້ມ. ນອກຈາກນີ້, "ງານບຸນປະເພນີ" ຍັງຖືກພົບວ່າ ເປັນວິທີການໂຄສະນາເຜີຍແຜ່ສິລະປະການສະແດງທີ່ມີປະສິດທິຜົນ ເພາະມັນເປັນໂອກາດໃຫ້ຜູ້ຄົນໄດ້ມາຊົມ ແລະ ພົວພັນກັບສິລະປະທີ່ເປັນເອກະລັກຂອງທ້ອງຖິ່ນ. ການສຶກສາອື່ນໆກໍໄດ້ສະໜັບສະໜູນແນວທາງໃນການປົກປັກຮັກສາ ແລະ ສົ່ງເສີມເຊັ່ນກັນ:

- ການສ້າງສັນ ແລະ ປັບປ່ຽນຮູບແບບ: ອຸສະນີ ເພັ່ມດີ (2015) ໄດ້ນຳສະເໜີແນວທາງການອະນຸລັກດ້ວຍການສ້າງສັນຮູບແບບໃໝ່ (ເຊັ່ນ: "ໂຈຫຼຸຍອອນລາຍ") ເພື່ອໃຫ້ສອດຄ່ອງກັບການປ່ຽນແປງທາງສັງຄົມ ແລະ ຂະຫຍາຍຖານຜູ້ຊົມຮຸ່ນໃໝ່. ນີ້ຊີ້ໃຫ້ເຫັນເຖິງຄວາມຈຳເປັນໃນການປັບຕົວຂອງສິລະປະພື້ນເມືອງເພື່ອໃຫ້ຍັງຄົງຄວາມສົນໃຈໃນຍຸກສະໄໝໃໝ່.
- ການຖ່າຍທອດຄວາມຮູ້ ແລະ ພັດທະນາຫຼັກສູດ: ສຸທິຣາ ອະທະວົງສາ (2017) ພົບວ່າ ການພັດທະນາຮູບແບບ ແລະ ທັກສະການຟ້ອນ, ການສອນ ແລະ ການເຝິກອົບຮົມ ເປັນການຖ່າຍທອດພູມປັນຍາຄວາມຮູ້ທີ່ໃຫ້ຜົນໃນທາງປະຈັກ. ນີ້ເນັ້ນຄວາມສຳຄັນຂອງການສຶກສາ ແລະ ການຝຶກອົບຮົມຢ່າງເປັນລະບົບ. ສອດຄ່ອງກັບຂໍ້ກ່າວໃນພາກສະເໜີທີ່ວ່າ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ພັດທະນາ

ຫຼັກສູດການຮຽນ-ການສອນໃນໂຮງຮຽນສິລະປະແຫ່ງຊາດ ແລະ ຍົກລະດັບໂຮງຮຽນຂຶ້ນເປັນສະຖາບັນການສຶກສາ.

- ການມີສ່ວນຮ່ວມຂອງພາກລັດ ແລະ ການຈັດສັນງົບປະມານ:

ຮຸ່ງທິບ ສຸວັນນະສະຖິດ ແລະ ກິດສະໜາ ໄວສໍາລວດ (2019) ໄດ້ສະເໜີໃຫ້ອົງກອນປົກຄອງສ່ວນທ້ອງຖິ່ນຈັດສັນງົບປະມານເພື່ອກິດຈະກໍາອະນຸລັກວັດທະນະທໍາ ແລະ ພິຈາລະນາຄວາມສົມດູນໃນການຮັບເອົາຄ່ານິຍົມທີ່ແຕກຕ່າງກັນ. ນີ້ສະແດງໃຫ້ເຫັນວ່າການສະໜັບສະໜູນຈາກພາກລັດ ແລະ ການສ້າງນະໂຍບາຍທີ່ຊັດເຈນແມ່ນມີຄວາມສໍາຄັນຕໍ່ການປົກປັກຮັກສາຢ່າງຍືນຍົງ.

ສະຫຼຸບແລ້ວ ບັນຫາຫຼັກທີ່ພົບແມ່ນອິດທິພົນຈາກການພັດທະນາ, ເຕັກໂນໂລຊີ ແລະ ຂໍ້ຈໍາກັດດ້ານເສດຖະກິດ. ສ່ວນແນວທາງແກ້ໄຂແມ່ນເນັ້ນໃສ່ການປູກຈິດສໍານຶກ, ການໃຊ້ງານບຸນປະເພນີເປັນເວທີເຜີຍແຜ່, ການປັບຕົວສ້າງສັນຮູບແບບໃໝ່, ແລະ ການສະໜັບສະໜູນຈາກພາກລັດໃນດ້ານການສຶກສາ ແລະ ງົບປະມານ. ຜົນການຄົ້ນຄວ້າເຫຼົ່ານີ້ຈະເປັນພື້ນຖານອັນສໍາຄັນໃຫ້ແກ່ການວາງແຜນ ແລະ ດໍາເນີນງານເພື່ອປົກປັກຮັກສາ ແລະ ສົ່ງເສີມສິລະປະການສະແດງທີ່ເປັນເອກະລັກຂອງແຂວງຫຼວງພະບາງໃຫ້ຍືນຍົງຄູ່ກັບຄົນລາວຕະຫຼອດໄປ.

## 6. ສະຫຼຸບຜົນ

ການຄົ້ນຄວ້າເລື່ອງ "ການປົກປັກຮັກສາ ແລະ ສົ່ງເສີມວັດທະນະທໍາສິລະປະການສະແດງທີ່ເປັນເອກະລັກຂອງເມືອງມໍລະດົກໂລກ ແຂວງຫຼວງພະບາງ ຕາມແຜນພັດທະນາວັດທະນະທໍາ-ສັງຄົມແຫ່ງຊາດລາວ" ມີຈຸດປະສົງເພື່ອສຶກສາປະເພດ, ປະຫວັດຄວາມເປັນມາ, ຂະບວນການປ່ຽນແປງ, ບັນຫາ ແລະ ແນວທາງໃນການປົກປັກຮັກສາ ແລະ ສົ່ງເສີມສິລະປະການສະແດງພື້ນເມືອງຂອງແຂວງຫຼວງພະບາງ. ຜົນການຄົ້ນຄວ້າໄດ້ສະຫຼຸບເປັນປະເດັນສໍາຄັນດັ່ງນີ້:

*6.1 ປະເພດ ແລະ ປະຫວັດຄວາມເປັນມາຂອງສິລະປະການສະແດງພື້ນເມືອງ*

ການຂັບ: ຂັບປະກອບມີ ຂັບທຸ້ມ, ອ່ານໜັງສື, ຂັບສະຫຼາງ-ສາມສ້າວ, ສອງຄອນລອດໄຄ້, ມ້າຢ່ອງ, ນາກສະດຸ້ງ, ຂັບງ້ອມ, ຂັບດອກດິນ ແລະ ຂັບເສືອເຂົ້າເລົ່າ. ການຂັບແຕ່ແບບມີລັກສະນະສະເພາະຕົວໃນການປະພັນເນື້ອຮ້ອງ, ທໍານອງ ແລະ ການນໍາໃຊ້ໃນງານພິທີຕ່າງໆ. ຂັບທຸ້ມເປັນສິລະປະການຂັບຮ້ອງທີ່ມີມາແຕ່ບູຮານນະການ, ມີໂຄງສ້າງການປະດິດແຕ່ງທີ່ເປັນເອກະລັກ. ການອ່ານໜັງສືເປັນການສືບທອດພູມປັນຍາດ້ວຍການອ່ານວັນນະຄະດີວັດບູຮານທີ່ກ່ຽວຂ້ອງກັບພຸດທະສາສະໜາ ແລະ ວັດທະນະທໍາລາວ.

ການຟ້ອນ: ປະກອບມີ ຟ້ອນນາງແກ້ວ ແລະ ຟ້ອນພະລັກພະລາມ. ຟ້ອນນາງແກ້ວ ເປັນການຟ້ອນບູຊາທີ່ມີຄວາມເຊື່ອຖືວ່າເປັນການເອີ້ນຂວັນ, ເສີມສິລິມຸງຄຸນ, ປະຕິບັດໃນງານມຸງຄຸນຕ່າງໆ ແລະ ເປັນສ່ວນໜຶ່ງຂອງພິທີກໍາທາງສາດສະໜາ. ການຟ້ອນນີ້ສະທ້ອນເຖິງຄວາມສັດທາ ແລະ ຄວາມສໍາພັນລະຫວ່າງມະນຸດກັບສິ່ງສັກສິດ. ຟ້ອນພະລັກພະລາມ ແມ່ນຟ້ອນພື້ນເມືອງທີ່ໄດ້ຮັບອິດທິພົນຈາກຂະເໝນ ແຕ່ໄດ້ຖືກນໍາມາປັບປ່ຽນໃຫ້ເຂົ້າກັບລັກສະນະ ແລະ ເອກະລັກຂອງລາວ. ການປັບປ່ຽນນີ້ສະແດງໃຫ້ເຫັນເຖິງການສ້າງສັນ ແລະ ປັບຕົວຂອງວັດທະນະທໍາໃຫ້ຍັງຄົງຢູ່ໄດ້ໃນສັງຄົມ.

*6.2 ຂະບວນການປ່ຽນແປງຂອງສິລະປະການສະແດງພື້ນເມືອງ*

ສິລະປະການສະແດງພື້ນເມືອງກໍາລັງປະເຊີນກັບການປ່ຽນແປງທີ່ສອດຄ່ອງກັບການພັດທະນາທາງສັງຄົມ ແລະ ເຕັກໂນໂລຊີທີ່ທັນສະໄໝ. ການໃຊ້ສື່ສັງຄົມອອນລາຍ ແລະ ໂທລະສັບສະມາດໂຟນທີ່ແຜ່ຫຼາຍໃນກຸ່ມໄວໜຸ່ມ ເຮັດໃຫ້ຄວາມສົນໃຈ ແລະ ການສືບທອດສິລະປະເຫຼົ່ານີ້ຫຼຸດໜ້ອຍຖອຍລົງ.

ເຖິງຢ່າງໃດກໍຕາມ, ການປ່ຽນແປງກໍລວມເຖິງການປັບຕົວ ແລະ ປະຍຸກໃຊ້ເພື່ອໃຫ້ຍັງຄົງຢູ່ໄດ້, ເຊັ່ນດຽວກັບກໍລະນີຂອງຟ້ອນພະລັກພະລາມທີ່ປັບຈາກແບບຂະເໝນມາເປັນແບບລາວ, ຫຼືແນວຄິດການສ້າງສັນຮູບແບບໃໝ່ໆເພື່ອດຶງດູດຜູ້ຊົມ.

*6.3 ບັນຫາ, ແນວທາງໃນການປົກປັກຮັກສາ ແລະ ສົ່ງເສີມສິລະປະການສະແດງພື້ນເມືອງ*

1) ບັນຫາໃນການປົກປັກຮັກສາ ແລະ ສົ່ງເສີມສິລະປະການສະແດງພື້ນເມືອງ

- ອິດທິພົນຈາກການພັດທະນາ ແລະ ເຕັກໂນໂລຊີ: ການແຜ່ກະຈາຍຂອງວັດທະນະທໍາຕ່າງປະເທດຜ່ານສື່ທັນສະໄໝເຮັດໃຫ້ຄົນຮຸ່ນໃໝ່ຫັນໄປສົນໃຈສິ່ງໃໝ່ໆຫຼາຍກວ່າສິລະປະພື້ນເມືອງ.

- ບັນຫາດ້ານເສດຖະກິດ: ລາຍຮັບ-ລາຍຈ່າຍຂອງນັກສິລະປິນພື້ນເມືອງ ແລະ ຄ່າຈ້າງໃນການສະແດງທີ່ສູງ ເປັນອຸປະສັກຕໍ່ການເຂົ້າເຖິງ ແລະ ການສະໜັບສະໜູນຈາກປະຊາຊົນທົ່ວໄປ, ສົ່ງຜົນກະທົບຕໍ່ການສືບທອດ.

2) ແນວທາງໃນການປົກປັກຮັກສາ ແລະ ສົ່ງເສີມສິລະປະການສະແດງພື້ນເມືອງ

- ການປູກຈິດສໍານຶກ: ເປັນວິທີການທີ່ສໍາຄັນທີ່ສຸດໃນການສ້າງຄວາມຮູ້, ຄວາມເຂົ້າໃຈ ແລະ ຄຸນຄ່າໃຫ້ຄົນຮຸ່ນໃໝ່.

- ການນໍາໃຊ້ງານບຸນປະເພນີ: ເປັນເວທີສໍາຄັນໃນການໂຄສະນາເຜີຍແຜ່ ແລະ ສ້າງໂອກາດໃຫ້ປະຊາຊົນໄດ້ຊົມ ແລະ ພົວພັນກັບສິລະປະ.

- ການສ້າງສັນ ແລະ ປັບປ່ຽນຮູບແບບ: ການນຳເອົາສິລະປະພື້ນເມືອງມາສ້າງສັນໃນຮູບແບບທີ່ທັນສະໄໝ ຫຼື ເປັນທີ່ນິຍົມ ເພື່ອດຶງດູດຄົນຮຸ່ນໃໝ່.

- ການຖ່າຍທອດຄວາມຮູ້ ແລະ ພັດທະນາຫຼັກສູດ: ການຈັດການຮຽນ-ການສອນຢ່າງເປັນລະບົບໃນສະຖາບັນການສຶກສາ ແລະ ການຝຶກອົບຮົມນັກສິລະປິນຮຸ່ນໃໝ່.

- ການສະໜັບສະໜູນຈາກພາກລັດ: ການຈັດສັນງົບປະມານ ແລະ ສ້າງນະໂຍບາຍທີ່ຊັດເຈນເພື່ອສະໜັບສະໜູນການອະນຸລັກ ແລະ ສົ່ງເສີມວັດທະນະທຳ.

ຜົນການຄົ້ນຄວ້າສະແດງໃຫ້ເຫັນວ່າ ສິລະປະການສະແດງພື້ນເມືອງຂອງຫຼວງພະບາງມີຄວາມສຳຄັນ ແລະ ປະເຊີນກັບສິ່ງທ້າທາຍ.

ດັ່ງນັ້ນ, ການຮ່ວມມືກັນລະຫວ່າງພາກລັດ, ນັກສິລະປິນ, ຊຸມຊົນ ແລະ ປະຊາຊົນ ຈຶ່ງມີຄວາມສຳຄັນຢ່າງຍິ່ງໃນການປົກປັກຮັກສາ ແລະ ສົ່ງເສີມມໍລະດົກອັນລ້ຳຄ່ານີ້ໃຫ້ຍືນຍົງຄູ່ກັບປະເທດຊາດຕະຫຼອດໄປ.

## 7. ຂໍ້ສະເໜີແນະ

ໃນການສຶກສາຄັ້ງຕໍ່ໄປຄວນຈະສຶກສາປະເພດສິລະປະການສະແດງອື່ນໆທີ່ຍັງບໍ່ໄດ້ກ່າວເຖິງໃນການຄົ້ນຄວ້າຄັ້ງນີ້ ເຊັ່ນ:

1) ລະຄອນສັດ, ຫຸ່ນ ຫຼື ສິລະປະການສະແດງພື້ນເມືອງໃນແຂວງອື່ນໆ

2) ການສຶກສາກ່ຽວກັບຜົນກະທົບຂອງສື່ສັງຄົມອອນລາຍ ແລະ ເຕັກໂນໂລຊີດິຈິຕອລຕໍ່ການສືບທອດ, ການຮຽນຮູ້ ແລະ ການເຜີຍແຜ່ສິລະປະການສະແດງພື້ນເມືອງ

## 8. ຂໍ້ຈຳກັດຂອງການຄົ້ນຄວ້າ

- ການເກັບກຳຂໍ້ມູນຫຼັກແມ່ນອີງໃສ່ການສຳພາດນັກສະແດງຮຸ່ນອາວຸໂສ ແລະ ຮຸ່ນສືບທອດເປັນຫຼັກ, ເຊິ່ງອາດມີຂໍ້ຈຳກັດໃນດ້ານຄວາມຫຼາກຫຼາຍຂອງມຸມມອງຈາກພາກສ່ວນອື່ນໆ ເຊັ່ນ: ຜູ້ຊົມ, ຜູ້ຈັດງານ ຫຼື ໜ່ວຍງານສົ່ງເສີມວັດທະນະທຳທີ່ບໍ່ແມ່ນນັກສິລະປິນໂດຍກົງ.

- ຂໍ້ມູນທີ່ໄດ້ຮັບສ່ວນໃຫຍ່ເປັນຂໍ້ມູນທາງຄຸນນະພາບທີ່ອີງໃສ່ປະສົບການ, ຄວາມຄິດເຫັນ ແລະ ການຮັບຮູ້ຂອງຜູ້ໃຫ້ສຳພາດ. ດັ່ງນັ້ນ, ຜົນການຄົ້ນຄວ້າອາດຂາດການຢັ້ງຢືນດ້ວຍຂໍ້ມູນທາງປະລິມານທີ່ສາມາດວັດແທກ ແລະ ສະຖິຕິໄດ້.

## 9. ເອກະສານອ້າງອີງ


ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສົມທົບກັບ ກົມໂຄສະນາເຜີຍແຜ່ກົດໝາຍ, ກະຊວງຍຸຕິທຳ (2017). *ກົດໝາຍ ວ່າດ້ວຍສິລະປະການສະແດງ* ກົມສິລະປະການສະແດງ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ກະຊວງແຜນການ ແລະ ການລົງທຶນ. (2016). *ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020)*. ສປປ ລາວ.

ກົມສິລະປະ-ວັດທະນະທຳ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ. (2023). *ສິລະປະຟ້ອນລາຍງູ້ວບ້ານປາກະຍຸງໃນ ສປປ ລາວ.*

ແກ້ວ ໄຊຍະວົງ. (2016). *ບົດຂັບສະຫຼາງ-ສາມສ້າວຂອງບ້ານລາດທານ ເມືອງງາ ແຂວງອຸດົມໄຊ.* ບົດຈົບຊັ້ນລະດັບປະລິນຍາຕີ ຄະນະພາສາສາດ ມະຫາວິທະຍາໄລ ສຸພານຸວົງ.

ຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ.

ສະຖາບັນວິທະຍາສາດສັງຄົມແຫ່ງຊາດ. (2019). *ປະມວນມໍລະດົກວັດທະນະທຳນິວັດຖຸເຜົ່າລາວ.*

ໜູນແກ້ວ ອໍລະບູນ. (2008). *ບົດປາຖະກະຖາ ຫົວຂໍ້ ການອະນຸລັກ ແລະ ສົ່ງເສີມວັດທະນະທຳອັນດີງາມຂອງຊາດລາວ.* ກະຊວງຖະແຫຼງ

ໜູນແກ້ວ ອໍລະບູນ. (2014). *ບົດປາຖະກະຖາ ຫົວຂໍ້ ທິດຊີ້ນຳໃນການປົກປັກຮັກສາ ແລະ ແນວທາງສົ່ງເສີມວັດທະນະທຳອັນດີງາມຂອງຊາດລາວ.* ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ.

ໝອນ ຄຸດທະວົງ (2017*). ສິລະປະການປະດິດແຕ່ງໃນປຶ້ມບົດ "ອ່ານໜັງສືຫຼວງພະບາງ" ຂອງທຸມພັນ ຣັດຕະນະວົງ (1998).* ບົດຈົບຊັ້ນລະດັບປະລິນຍາຕີ ຄະນະພາສາສາດ ມະຫາວິທະຍາໄລ ສຸພານຸວົງ.

นางสาว อุษณี เพิ่มดี. (2015). *การสื่อสารเพื่อการอนุรักษ์หุ่นละครเล็กโจหลุยส์* หลักสูตรปริญญานิเทศศาสตรมหาบัณฑิต สาขาวิชานิเทศศาสตร์ มหาวิทยาลัยสุโขทัยธรรมาธิราช

อรรถญา ไชยเชษฐ และ ธีระวัฒน์ จันทึก. (2017). *แนวทางในการอนุรักษ์ศิลปะการแสดงพื้นบ้านของผู้สูงอายุ เพื่อให้วัยรุ่นตระหนักรู้ คณะวิทยาการจัดการ มหาวิทยาลัยศิลปากร*

รุ่งทิพย์ สุวรรณสถิตย์ และ กฤษณา ไวสำรวจ. (2019). *การส่งเสริม และ การอนุรักษ์ศิลปะการแสดงมโนราห์ ขององค์กรปกครองส่วนท้องถิ่น จังหวัดนครศรีธรรมราช* วารสารมนุษยศาสตร์และสังคมศาสตร์ มหาวิทยาลัยราชภัฏสุรินทร์ ปีที่ 21 ฉบับที่ 1

Creswell, J. W. (2014). *ການອອກແບບການຄົ້ນຄວ້າ: ວິທີການວິທີການດ້ານຄຸນນະພາບ, ປະລິມານ ແລະ ແບບປະສົມ (4th ed.).* Thousand Oaks, CA: Sage. Retrieved November 1, 2016, from: https://www.researchgate.net/file.PostFileLoader.html?id=55eb95f16307d984de8b4584&assetKey=AS%3A273846907670528%401442301598571